ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 05 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 27 ທັນວາ 2006

# ກົດໝາຍ
# ວ່າດ້ວຍ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍການປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ ກຳນົດຫລັກການ, ລະບຽບການ ແລະມາດຕະການກ່ຽວກັບການຄຸ້ມຄອງ, ການຕິດຕາມ, ກວດກາການຈັດຕັ້ງປະຕິບັດການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກບັນດາເຜົ່າ ລວມທັງ ມາດຕະການຕໍ່ຜູ້ກະທຳຜິດຕໍ່ເດັກ ແນໃສ່ເຮັດໃຫ້ເດັກມີຄວາມສົມບູນທາງດ້ານຮ່າງກາຍ, ຈິດໃຈ ແລະ ມັນສະໝອງ, ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ, ສາມາດດຳລົງຊີວິດໃນສັງຄົມຢ່າງມີຄຸນນະພາບ ແລະກາຍເປັນຜູ້ສືບທອດທີ່ດີຂອງຊາດ.

**ມາດຕາ 2. ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ເດັກ** ໝາຍເຖິງ ບຸກຄົນທີ່ມີອາຍຸຕ່ຳກວ່າ ສິບແປດ ປີ;
2. **ເດັກທີ່ຕ້ອງການການປົກປ້ອງພິເສດ** ໝາຍເຖິງ ເດັກກຳພ້າ, ກຳພອຍ, ເດັກທີ່ຖືກປະຖິ້ມ, ເດັກທີ່ຖືກປະລະ ຫລື ເດັກທີ່ບໍ່ໄດ້ຮັບການເອົາໃຈໃສ່ຈາກພໍ່ແມ່ໃນການເບິ່ງແຍງລ້ຽງດູ, ເດັກທີ່ຖືກທຳຮ້າຍຮ່າງກາຍ, ເດັກທີ່ຖືກທາລຸນທາງເພດ, ເດັກທີ່ກາຍເປັນໂສເພນີ, ຕົກເປັນເຫຍື່ອຂອງການຄ້າມະນຸດ, ເດັກທີ່ເຮັດວຽກຢູ່ໃນສະພາບທີ່ເປັນອັນຕະລາຍຮ້າຍແຮງຕໍ່ຊີວິດ, ສຸຂະພາບ ຫລື ຖືກຂູດຮີດແຮງງານ, ເດັກນ້ອຍອົບພະຍົບ, ເດັກທີ່ຕິດຢາເສບຕິດ, ເດັກທີ່ໄດ້ຮັບຜົນກະທົບຈາກໂຣກເອດ ຫລື ເຊື້ອເອັສໄອວີ ແລະເດັກທີ່ເປັນຜູ້ຖືກເສັຍຫາຍໃນຂະບວນການດຳເນີນຄະດີ;

3. **ເດັກພິການ** ໝາຍເຖິງ ເດັກທີ່ບໍ່ມີຄວາມສົມບູນທາງດ້ານຮ່າງກາຍ,ຈິດໃຈ ຫລື ມັນສະໝອງ ຊຶ່ງສ້າງຄວາມທໍລະມານ ແລະສິ່ງຜົນສະທ້ອນຕໍ່ການເຕີບໃຫຍ່ ແລະການພັດທະນາຂອງເດັກ. ການພິການດັ່ງກ່າວ ອາດຈະເກີດຂຶ້ນໃນເວລາເກີດ ຫລື ຫລັງການເກີດ;
4. **ເດັກທີ່ຖືກປະລະ** ໝາຍເຖິງ ເດັກທີ່ຂາດການເອົາໃຈໃສ່ເບິ່ງແຍງລ້ຽງດູ, ສຶກສາອົບຮົມ, ສົ່ງເສີມ, ສະໜອງເງື່ອນໄຂທີ່ຈໍາເປັນໃນການພັດທະນາຂອງເດັກ ຈາກພໍ່ແມ່ ຫລື ຜູ້ປົກຄອງ ເຊັ່ນ: ດ້ານສຸຂະພາບ,ໂພຊະນາການທີ່ພຽງພໍ ແລະຖືກຫຼັກອະນາໄມ, ດ້ານທີ່ຢູ່ອາໄສທີ່ປອດໄພ, ດ້ານການສຶກສາ, ການພັດທະນາທາງດ້ານຈິດໃຈ ບົນພື້ນຖານເງື່ອນໄຂທາງດ້ານເສດຖະກິດຂອງຄອບຄົວ;
5. **ເດັກທີ່ຖືກປະຖິ້ມ** ໝາຍເຖິງ ເດັກທີ່ຖືກປ່ອຍປະຈາກພໍ່ແມ່ ຫລື ຜູ້ປົກຄອງ ໃນການຄຸ້ມຄອງເບິ່ງແຍງ ແລະລ້ຽງດູ;
6. **ເດັກກໍາພ້າ** ໝາຍເຖິງ ເດັກທີ່ພໍ່ ຫລື ແມ່ ໄດ້ເສັຍຊີວິດ;
7. **ເດັກກໍາພອຍ** ໝາຍເຖິງ ເດັກທີ່ ພໍ່ ແລະ ແມ່ ໄດ້ເສັຍຊີວິດທັງໝົດ;
8. **ເດັກທີ່ຖືກທໍາຮ້າຍຮ່າງກາຍ** ໝາຍເຖິງ ເດັກທີ່ຖືກທຸບຕີ ຫລື ທໍລະມານ ຈາກພໍ່ແມ່, ຜູ້ປົກຄອງ ຫລື ຜູ້ອື່ນໆ;
9. **ເດັກທີ່ຖືກລ່ວງລະເມີດທາງເພດ** ໝາຍເຖິງ ເດັກທີ່ຖືກຂົ່ມຂືນທໍາຊໍາເລົາ, ຖືກທໍາຊໍາເລົາ ຫລື ຖືກທໍາອະນາຈານ;
10. **ເດັກທີ່ໄດ້ຮັບຜົນກະທົບຈາກໂຣກເອດ ຫລື ເຊື້ອເອັສໄອວີ** ໝາຍເຖິງ ເດັກທີ່ເປັນໂຣກເອດ, ຕິດເຊື້ອເອັສໄອວີ, ເດັກທີ່ເປັນກໍາພ້າ, ກໍາພອຍ ທີ່ເນື່ອງມາຈາກເຊື້ອເອັສໄອວີ/ເອດ ຫລື ເດັກທີ່ໄດ້ອາໄສຢູ່ກັບສະມາຊິກຄອບຄົວທີ່ເປັນໂຣກເອດ ຫລື ຕິດເຊື້ອເອັສໄອວີ;
11. **ເດັກດ້ອຍໂອກາດ** ໝາຍເຖິງ ເດັກທີ່ຂາດເງື່ອນໄຂອັນຈໍາເປັນ ໃນການຕອບສະໜອງ ຫລື ອໍານວຍຄວາມສະດວກ ແກ່ການພັດທະນາຄວາມຮູ້ຄວາມສາມາດ;
12. **ເດັກກະທໍາຜິດ** ໝາຍເຖິງ ເດັກທີ່ຖືກດໍາເນີນຄະດີອາຍາ: ເປັນຜູ້ຖືກຫາ, ເປັນຈໍາເລີຍ ຫລື ຖືກສານຕັດສິນວ່າມີຄວາມຜິດທາງອາຍາ;
13. **ຜູ້ປົກຄອງເດັກ** ໝາຍເຖິງ ຜູ້ທີ່ມີຄວາມຮັບຜິດຊອບຕໍ່ເດັກ ຄືກັນກັບພໍ່ແມ່ຂອງເດັກ;
14. **ນັກສັງຄົມສົງເຄາະ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຈາກອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ເພື່ອໃຫ້ການຊ່ວຍເຫລືອເດັກທີ່ຕ້ອງການການປົກປ້ອງພິເສດ;
15. **ການທາລຸນເດັກ** ໝາຍເຖິງ ການກະທໍາ ຫລື ການເມີນເສີຍ ຊຶ່ງເປັນການທໍາຮ້າຍຮ່າງກາຍ, ທໍາລາຍຈິດໃຈຂອງເດັກ, ການລ່ວງລະເມີດທາງເພດຕໍ່ເດັກ, ການຍຸຍົງໃຫ້ເດັກກະທໍາຜິດ ຫລື ກະທໍາໃນສິ່ງທີ່ມີຜົນສະທ້ອນຕໍ່ຮ່າງກາຍ ຫລື ຈິດໃຈຂອງເດັກ;
16. **ການປົກປ້ອງເດັກ** ໝາຍເຖິງ ການເຄື່ອນໄຫວຂອງບຸກຄົນ ຫລື ການຈັດຕັ້ງ ແນໃສ່ຮັບປະກັນໃຫ້ເດັກມີຊີວິດ ແລະເຕີບໃຫຍ່, ໄດ້ຮັບການພັດທະນາທາງດ້ານຄຸນສົມບັດ,ຄວາມ

ຮູ້, ຄວາມສາມາດ, ໄດ້ຮັບການປົກປ້ອງທາງດ້ານສິດ ແລະຜົນປະໂຫຍດ, ສາມາດເຂົ້າຮ່ວມການເຄື່ອນໄຫວໃນສັງຄົມຢ່າງມີປະສິດທິພາບ;

17. **ການຊ່ວຍເຫລືອເດັກ** ໝາຍເຖິງ ການເຄື່ອນໄຫວຂອງບຸກຄົນ ແລະການຈັດຕັ້ງ ເພື່ອກອບກູ້ເອົາເດັກທີ່ຕົກຢູ່ໃນອັນຕະລາຍ, ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງເດັກ, ນໍາສົ່ງເດັກກັບຄືນສູ່ຄອບຄົວ ແລະ ເພື່ອໃຫ້ເດັກປັບຕົວເຂົ້າກັບສັງຄົມ;
18. **ສູນຝຶກອົບຮົມສໍາລັບເດັກກະທໍາຜິດ** ໝາຍເຖິງ ສູນສໍາລັບສຶກສາອົບຮົມດ້ານແນວຄິດ ແລະການກະທໍາຂອງເດັກ ລວມທັງການຝຶກວິຊາຊີບ ເພື່ອໃຫ້ເດັກກັບເປັນຄົນດີຂອງສັງຄົມ;
19. **ການສືບສວນ-ສອບຖາມ** ໝາຍເຖິງ ການສືບສວນ-ສອບສວນໃນຄະດີເດັກກະທໍາຜິດ.

### ມາດຕາ 3. ສິດຂອງເດັກ

ເດັກທຸກຄົນ ມີສິດພື້ນຖານດັ່ງນີ້:

1. ດໍາລົງຊີວິດຢ່າງປອດໄພ ແລະໄດ້ຮັບການພັດທະນາທາງດ້ານຮ່າງກາຍ ແລະ ຈິດໃຈຢ່າງເໝາະສົມ;
2. ໄດ້ຮັບການຈົດທະບຽນການເກີດ, ການຕັ້ງຊື່ ແລະ ນາມສະກຸນ ແລະ ໄດ້ສັນຊາດ;
3. ຖືກຮັບຮູ້ ແລະໄດ້ຮັບການເບິ່ງແຍງດູແລ ຈາກພໍ່ແມ່ ແລະບໍ່ຖືກແຍກອອກຈາກພໍ່ແມ່ ເວັ້ນເສັຍແຕ່ ໃນກໍລະນີເພື່ອປົກປ້ອງຜົນປະໂຫຍດຂອງເດັກ;
4. ໄດ້ຮັບການເບິ່ງແຍງດ້ານສຸຂະພາບ, ການປິ່ນປົວ ແລະຟື້ນຟູສຸຂະພາບໃນເວລາເຈັບເປັນ ;
5. ໄດ້ຮັບການສຶກສາ ເພື່ອໃຫ້ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ, ພອນສະຫວັນ, ການກໍ່ສ້າງດ້ານວິຊາຊີບ, ສີມືແຮງງານ ແລະ ມີວຽກເຮັດງານທໍາ ;
6. ປາກເວົ້າ, ສະແດງຄໍາຄິດຄໍາເຫັນ, ພົບປະ ແລະແລກປ່ຽນບົດຮຽນທີ່ດີ ກັບເດັກດ້ວຍກັນ, ເຂົ້າຮ່ວມກິດຈະກໍາທາງສັງຄົມ, ສິນລະປະ, ວັນນະຄະດີ, ກິລາກາຍະກໍາ ແລະການພັກຜ່ອນທີ່ເໝາະສົມກັບໄວອາຍຸຂອງເດັກ;
7. ໄດ້ຮັບ ແລະຮູ້ຂໍ້ມູນຂ່າວສານ ຊຶ່ງມີເນື້ອໃນທີ່ເໝາະສົມກັບໄວອາຍຸ ແລະລະດັບການພັດທະນາຂອງເດັກ ພ້ອມທັງໄດ້ຮັບການປົກປ້ອງຈາກຂໍ້ມູນຂ່າວສານ ທີ່ເປັນອັນຕະລາຍຕໍ່ເດັກ;
8. ໄດ້ຮັບການປົກປ້ອງຈາກທຸກຮູບການທາລຸນ ທາງດ້ານຮ່າງກາຍ ແລະ ຈິດໃຈຕໍ່ເດັກ;
9. ໄດ້ຮັບການປົກປ້ອງພິເສດ ໃນຂະບວນການຍຸຕິທໍາ;
10. ໄດ້ຮັບສິດອື່ນໆຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 4. ຜົນປະໂຫຍດສູງສຸດຂອງເດັກ**

ໃນການຕົກລົງທຸກໆບັນຫາທີ່ພົວພັນກັບເດັກ ເປັນຕົ້ນ ບັນຫາ ການເບິ່ງແຍງລ້ຽງດູເດັກ, ການແຕ່ງຕັ້ງຜູ້ປົກຄອງເດັກ, ການເອົາເດັກເປັນລູກລ້ຽງ, ການສຶກສາ, ການປິ່ນປົວເດັກ ແລະ ການດຳເນີນຄະດີອາຍາສຳລັບເດັກ ຕ້ອງຖືຜົນປະໂຫຍດສູງສຸດຂອງເດັກເປັນປັດໃຈສຳຄັນ.

**ມາດຕາ 5. ຄວາມຮັບຜິດຊອບຂອງເດັກ**

ເດັກທຸກຄົນ ມີຄວາມຮັບຜິດຊອບຕົ້ນຕໍດັ່ງນີ້ :

1. ເຄົາລົບນັບຖື ພໍ່ແມ່, ຜູ້ປົກຄອງ, ສະມາຊິກພາຍໃນຄອບຄົວ, ຄູ, ອາຈານ, ທ່ານຜູ້ນຳ, ຜູ້ອາຍຸສູງ, ເຄົາລົບສິດຂອງຄົນອື່ນ;
2. ຊ່ວຍເຫລືອພໍ່ແມ່, ຄອບຄົວ, ໝູ່ເພື່ອນ, ຜູ້ອາຍຸສູງ ແລະ ຄົນພິການ ຕາມຄວາມສາມາດ;
3. ດຸໝັ່ນຮ່ຳຮຽນ ຢ່າງໜ້ອຍໃຫ້ຮຽນຈົບຊັ້ນປະຖົມ, ເຄົາລົບ ແລະ ປະຕິບັດກົດລະບຽບຂອງໂຮງຮຽນຢ່າງເຂັ້ມງວດ;
4. ຮັກສາສຸຂະພາບ, ອະນາໄມ, ສິ່ງສາທາລະນະປະໂຫຍດ ແລະ ສິ່ງແວດລ້ອມ;
5. ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດ;
6. ສັດຊື່ບໍລິສຸດ, ຮັກບ້ານເກີດເມືອງນອນ, ຮັກປະເທດຊາດ, ຮັກຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ, ນັບຖືວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ;
7. ປະກອບສ່ວນເຂົ້າໃນກິດຈະກຳທາງສັງຄົມ ບົນພື້ນຖານຄວາມສາມາດຂອງຕົນ.

**ມາດຕາ 6. ການບໍ່ຈຳແນກເດັກ**

ເດັກທຸກຄົນ ມີຄວາມສະເໝີພາບໃນທຸກດ້ານ ໂດຍບໍ່ຈຳແນກ ເພດ, ເຊື້ອຊາດ, ຊົນເຜົ່າ, ພາສາ, ຄວາມເຊື່ອຖື, ສາສະໜາ, ສະພາບທາງດ້ານຮ່າງກາຍ, ຖານະທາງດ້ານເສດຖະກິດ ແລະສັງຄົມ ຂອງຄອບຄົວ.

**ມາດຕາ 7. ການມີສ່ວນຮ່ວມຂອງເດັກ**

ລັດ, ສັງຄົມ ແລະ ຄອບຄົວ ຕ້ອງສ້າງເງື່ອນໄຂໃຫ້ເດັກມີສ່ວນຮ່ວມໃນກິດຈະກຳຕ່າງໆ, ອອກຄຳຄິດຄຳເຫັນຕໍ່ບັນຫາທີ່ພົວພັນກັບເດັກ. ຄຳເຫັນເຫຼົ່ານັ້ນ ຕ້ອງໄດ້ຮັບພິຈາລະນາ ຊັ່ງຊາ ບົນພື້ນຖານອາຍຸແລະຄວາມສາມາດຂອງເດັກໃນການຈຳແນກຄວາມຖືກຜິດ.

**ມາດຕາ 8. ຄວາມຮັບຜິດຊອບຂອງລັດ**

ລັດ ເຫັນຄວາມສຳຄັນຂອງເດັກຕໍ່ການປົກປັກຮັກສາ ແລະພັດທະນາປະເທດຊາດ. ລັດ ມີຄວາມຮັບຜິດຊອບວາງນະໂຍບາຍກ່ຽວກັບວຽກງານສຶກສາອົບຮົມ ແລະກໍ່ສ້າງເດັກ ໃຫ້ເດັກມີນ້ຳໃຈຮັກຊາດ, ບ້ານເກີດເມືອງນອນ, ສ້າງ ແລະຂະຫຍາຍໂຮງຮຽນສາມັນ, ໂຮງຮຽນວິຊາຊີບ, ສະຖານທີ່ເບິ່ງແຍງປິ່ນປົວໃຫ້

ພຽງພໍ, ສົ່ງເສີມໃຫ້ເດັກໄດ້ມີສ່ວນຮ່ວມໃນການເຄື່ອນໄຫວທາງສັງຄົມ, ສ້າງ ແລະ ປັບປຸງມາດຕະການໃນການປົກປ້ອງເດັກ ຈາກການຂູດຮີດ, ການປະລະ, ການທາລຸນ ແລະ ອື່ນໆ.

### ມາດຕາ 9. ຄວາມຮັບຜິດຊອບຂອງສັງຄົມ

ສັງຄົມ ມີຄວາມຮັບຜິດຊອບປະກອບສ່ວນສ້າງ ແລະພັດທະນາເດັກ ທາງດ້ານຮ່າງກາຍ, ສະຕິປັນຍາ ເປັນຕົ້ນ ແມ່ນເຂົ້າຮ່ວມໃນການສ້າງສະຖານທີ່ປິ່ນປົວສຸຂະພາບ, ສຶກສາຮ່ຳຮຽນ, ເຄື່ອນໄຫວສິນລະປະວັນນະຄະດີ, ກິລາກາຍະກຳ ແລະ ປົກປ້ອງເດັກ ຈາກສິ່ງຫຍໍ້ທໍ້ຕ່າງໆໃນສັງຄົມ.

### ມາດຕາ 10. ຄວາມຮັບຜິດຊອບຂອງພໍ່ແມ່, ຜູ້ປົກຄອງເດັກ

ພໍ່ແມ່, ຜູ້ປົກຄອງເດັກ ມີຄວາມຮັບຜິດຊອບດັ່ງນີ້:

1. ເບິ່ງແຍງລ້ຽງດູເດັກໃຫ້ເຕີບໃຫຍ່, ເອົາໃຈໃສ່ຮັກສາຄວາມປອດໄພຂອງເດັກ, ຊຸກຍູ້ ແລະ ສົ່ງເສີມການພັດທະນາເດັກ ຢ່າງຮອບດ້ານ, ປົກປ້ອງເດັກຈາກໄພອັນຕະລາຍເຊັ່ນ: ການໃຊ້ຄວາມຮຸນແຮງ , ການສວຍໃຊ້, ການກົດຂີ່ຂູດຮີດທຸກຮູບແບບ;
2. ຮັບປະກັນໃຫ້ເດັກໄດ້ຮັບການຮັກສາສຸຂະພາບຂັ້ນພື້ນຖານ;
3. ຊຸກຍູ້, ສົ່ງເສີມ, ສ້າງເງື່ອນໄຂ ແລະອຳນວຍຄວາມສະດວກ ໃຫ້ເດັກໄດ້ເຂົ້າໂຮງຮຽນ ຢ່າງໜ້ອຍໃຫ້ຈົບຊັ້ນປະຖົມ;
4. ສຶກສາອົບຮົມເດັກ ໃຫ້ເປັນຄົນດີຂອງຄອບຄົວ, ສັງຄົມ ແລະເປັນຜູ້ສືບທອດພາລະກິດຂອງປະເທດຊາດ;
5. ເປັນຜູ້ຕາງໜ້າຢ່າງຖືກຕ້ອງຕາມກົດໝາຍຂອງເດັກ, ປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ ຢູ່ສານ ແລະ ສະຖານທີ່ອື່ນໆ;
6. ປະພຶດຕົນເປັນແບບຢ່າງທີ່ດີໃຫ້ແກ່ເດັກ;
7. ມີຄວາມຮັບຜິດຊອບອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 11. ກອງທຶນ

ເພື່ອຮັບປະກັນການພັດທະນາ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ລັດເຫັນຄວາມຈຳເປັນຕ້ອງສ້າງກອງທຶນຂຶ້ນ. ແຫລ່ງຂອງກອງທຶນໄດ້ມາຈາກ :

- ງົບປະມານຂອງລັດ;
- ການປະກອບສ່ວນຂອງບຸກຄົນ ແລະ ການຈັດຕັ້ງພາຍໃນປະເທດ;
- ການຊ່ວຍເຫລືອຂອງຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;
- ແຫລ່ງອື່ນໆ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 12. ການພົວພັນຮ່ວມມືສາກົນ**

ລັດສົ່ງເສີມການພົວພັນຮ່ວມມືສາກົນກ່ຽວກັບການປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ ດ້ວຍ ການແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານ, ການກໍ່ສ້າງ ແລະ ບຳລຸງພະນັກງານ, ການຍາດແຍ່ງການຊ່ວຍເຫຼືອ ແລະອື່ນໆ.

## ພາກທີ II

## ການຮັກສາສຸຂະພາບ, ທະບຽນຄອບຄົວ ແລະ ການເບິ່ງແຍງລ້ຽງດູເດັກ

### ໝວດທີ 1

### ການຮັກສາສຸຂະພາບເດັກ

**ມາດຕາ 13. ການສະໜອງຂໍ້ມູນຂ່າວສານດ້ານສຸຂະພາບ**

ເດັກທຸກຄົນ ມີສິດຮຽນຮູ້ ແລະໄດ້ຮັບຂໍ້ມູນຂ່າວສານດ້ານສຸຂະພາບທີ່ຖືກຕ້ອງ ແລະພຽງພໍ ຈາກວິທະຍຸ, ໂທລະພາບ ແລະ ສື່ມວນຊົນອື່ນໆ.

ຂະແໜງການສາທາລະນະສຸກ, ສຶກສາ, ຖະແຫລງຂ່າວ-ວັດທະນະທຳ, ສື່ມວນຊົນ ແລະການຈັດຕັ້ງຕ່າງໆໃນສັງຄົມ ທັງພາກລັດ ແລະເອກະຊົນ ມີຄວາມຮັບຜິດຊອບ ຫລື ປະກອບສ່ວນໃນການສະໜອງຂໍ້ມູນຂ່າວສານດ້ານສຸຂະພາບໃຫ້ແກ່ເດັກຢ່າງເປັນປົກກະຕິ .

**ມາດຕາ 14. ການຮັກສາສຸຂະພາບ ແລະ ການໂພຊະນາການສຳລັບແມ່ຍິງຖືພາ**

ລັດ ເອົາໃຈໃສ່ໃຫ້ແມ່ຍິງຖືພາໄດ້ຮັບການບໍລິການ ທາງດ້ານສຸຂະພາບໃນເວລາຖືພາ ແລະ ຫລັງອອກລູກແລ້ວ ຕາມລະບຽບການ ເປັນຕົ້ນ ການກວດກາ, ການຕິດຕາມເບິ່ງຄວາມສ່ຽງຕ່າງໆ ທີ່ອາດຈະເກີດຂຶ້ນຕໍ່ແມ່ຍິງຖືພາ ແລະໃຫ້ການຊ່ວຍເຫລືອໃນການອອກລູກ .

ບຸກຄົນ ແລະອົງການຈັດຕັ້ງ ປະກອບສ່ວນໃຫ້ຂໍ້ມູນຂ່າວສານແກ່ແມ່ຍິງທີ່ພວມຖືພາຮູ້, ເຂົ້າໃຈກ່ຽວກັບການໂພຊະນາການ ເປັນຕົ້ນ ການກິນອາຫານທີ່ມີຄຸນປະໂຫຍດ ແລະບໍ່ເປັນອັນຕະລາຍຕໍ່ສຸຂະພາບ ເພື່ອໃຫ້ເດັກເກີດມາມີຄວາມສົມບູນທາງດ້ານຮ່າງກາຍ, ຈິດໃຈ ແລະມັນສະໝອງ.

**ມາດຕາ 15. ການຮັກສາສຸຂະພາບເດັກຂັ້ນພື້ນຖານ**

ລັດ ສ້າງເງື່ອນໄຂ ເພື່ອຮັບປະກັນໃຫ້ເດັກໄດ້ຮັບການຮັກສາສຸຂະພາບດັ່ງນີ້:

1. ໄດ້ຮັບການເອົາໃຈໃສ່ເບິ່ງແຍງດູແລຕັ້ງແຕ່ຢູ່ໃນທ້ອງແມ່ເປັນຕົ້ນມາ;
2. ໄດ້ຮັບການສັກ-ຢອດຢາກັນພະຍາດ ຕາມອາຍຸຂອງເດັກຢ່າງຄົບຖ້ວນ;
3. ໄດ້ຮັບການຕອບສະໜອງດ້ານໂພຊະນາການຢ່າງພຽງພໍ ແລະປອດໄພ, ດື່ມນ້ຳສະອາດ, ດຳລົງຊີວິດຢູ່ໃນສະພາບແວດລ້ອມທີ່ດີ, ປອດໄພຈາກມົນລະພາວະທີ່ເປັນອັນຕະລາຍຮ້າຍແຮງຕໍ່ສຸຂະພາບຂອງເດັກ;

4. ໄດ້ຮັບການສະໜອງຂໍ້ມູນຂ່າວສານ ແລະ ການສຶກສາທາງດ້ານການຮັກສາສຸຂະພາບ ທີ່ສອດຄ່ອງກັບລະດັບໄວອາຍຸ ແລະ ຄວາມເຂົ້າໃຈຂອງເດັກ;
5. ສາມາດໃຊ້ການບໍລິການປິ່ນປົວ ແລະ ການຟື້ນຟູສຸຂະພາບ;
6. ໄດ້ຮັບການກວດກາ ແລະ ຕິດຕາມສຸຂະພາບຢ່າງເປັນປົກກະຕິ.

**ມາດຕາ 16. ການຕິດຕາມ ແລະ ການປິ່ນປົວສຸຂະພາບຂອງເດັກ**

ເດັກພາຍຫຼັງເກີດ ມີສິດໄດ້ຮັບການກວດກາສຸຂະພາບ ແລະຕິດຕາມການຈະເລີນເຕີບໂຕ ຢ່າງເປັນປົກກະຕິ.

ເດັກອາຍຸ ສິບຫ້າ ປີ ຫາ ຕ່ຳກວ່າ ສິບແປດ ປີ ມີສິດຕັດສິນໃຈໃນການເລືອກວິທີ ຫລື ສະຖານທີ່ປິ່ນປົວທີ່ເໝາະສົມ ເວັ້ນເສຍແຕ່ເດັກນັ້ນ ຫາກຢູ່ໃນການຄວບຄຸມຂອງເຈົ້າໜ້າທີ່ ຫລື ບໍ່ມີສະຕິສົມບູນ.

ເດັກພິການ, ເດັກທີ່ຖືກປະຖິ້ມ, ເດັກຄອບຄົວທຸກຍາກ ໃນເວລາເຈັບເປັນ ຕ້ອງໄດ້ຮັບການກວດ ແລະ ປິ່ນປົວໃນສະຖານທີ່ບໍລິການປິ່ນປົວແຫ່ງຕ່າງໆ ໂດຍກອງທຶນສົງເຄາະຂອງລັດເປັນຜູ້ເສຍໃຫ້.

**ມາດຕາ 17. ການຮັກສາເດັກທີ່ໄດ້ຮັບຜົນກະທົບຈາກໂຣກເອດ ຫຼື ເຊື້ອເອສໄອວີ**

ລັດ ແລະສັງຄົມ ຕ້ອງສ້າງເງື່ອນໄຂໃຫ້ເດັກທີ່ໄດ້ຮັບຜົນກະທົບຈາກໂຣກເອດ ຫລື ເຊື້ອເອສໄອວີ ໄດ້ເຂົ້າເຖິງການບໍລິການ ທາງດ້ານການຮັກສາສຸຂະພາບ, ການສຶກສາ, ການດຳລົງຊີວິດຮ່ວມກັບຄອບຄົວ ແລະ ປົກປ້ອງເດັກຈາກການຈຳແນກທຸກຮູບແບບຈາກຊຸມຊົນ ແລະ ສັງຄົມ.

ລັດ ສ້າງເງື່ອນໄຂໃຫ້ເດັກທີ່ໄດ້ຮັບຜົນກະທົບຈາກໂຣກເອດ ຫຼື ເຊື້ອເອສໄອວີ ໄດ້ຮັບນະໂຍບາຍກ່ຽວກັບການປ້ອງກັນ ແລະ ການຮັກສາສຸຂະພາບດັ່ງນີ້ :

1. ຕ້ອງມີມາດຕະການປ້ອງກັນການຕິດເຊື້ອເອສໄອວີ/ເອດ ເປັນຕົ້ນຈາກແມ່ສູ່ລູກ;
2. ໃຫ້ຄຳປຶກສາຕໍ່ເດັກທີ່ເປັນໂຣກເອດ ຫຼື ຕິດເຊື້ອເອສໄອວີ. ບໍ່ໃຫ້ບັງຄັບເດັກໄປກວດ ເພື່ອຊອກຫາເຊື້ອ ເອສໄອວີ/ ເອດ ແລະສະພາບການຕິດເຊື້ອພະຍາດຂອງເດັກ ຕ້ອງຮັກສາເປັນຄວາມລັບ;
3. ໃຫ້ການຊ່ວຍເຫລືອໃນການປິ່ນປົວ ແລະ ການຮັກສາສຸຂະພາບເດັກທີ່ຕິດໂຣກເອດ ຫຼື ເຊື້ອເອສໄອວີ ລວມທັງການໃຫ້ຢາຕ້ານເຊື້ອ ແລະ ຢາປິ່ນປົວຕ່າງໆ;
4. ຊຸກຍູ້ສັງຄົມ ແລະ ຊຸມຊົນ ໃຫ້ການຊ່ວຍເຫລືອແກ່ເດັກທີ່ໄດ້ຮັບຜົນກະທົບຈາກໂຣກເອດ ຫຼື ຕິດເຊື້ອເອສໄອວີ.

**ມາດຕາ 18. ຄວາມຮັບຜິດຊອບຂອງລັດໃນການປົກປ້ອງເດັກຈາກອຸປະຕິເຫດ**

ລັດ ມີຄວາມຮັບຜິດຊອບວາງລະບຽບການ, ມາດຕະການ, ຊຸກຍູ້ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ເພື່ອປົກປ້ອງເດັກຈາກອຸປະຕິເຫດຕ່າງໆ ທີ່ນຳຜົນເສຍຫາຍຕໍ່ຊີວິດ ຫລື ສຸຂະພາບຂອງເດັກ ເປັນຕົ້ນ ຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພຂອງການຈະລາຈອນບົນທ້ອງຖະໜົນ ແລະ ໃນສະຖານທີ່ລ້ຽງເດັກ.

## ໝວດທີ 2
## ທະບຽນຄອບຄົວຂອງເດັກ

**ມາດຕາ 19. ການຈົດທະບຽນການເກີດຂອງເດັກ**

ເດັກທີ່ເກີດຢູ່ໂຮງໝໍ ຕ້ອງໄດ້ຮັບການຢັ້ງຢືນຈາກໂຮງໝໍນັ້ນ ແລ້ວໃຫ້ພໍ່ ຫລື ແມ່ ນຳເອກະສານດັ່ງກ່າວ ໄປແຈ້ງຕໍ່ນາຍບ້ານບ່ອນທີ່ຕົນຢູ່ ຫລື ບ່ອນທີ່ຕົນໄດ້ຈົດທະບຽນສຳມະໂນຄົວ ເພື່ອຈົດທະບຽນການເກີດຂອງເດັກ.

ເດັກທີ່ບໍ່ເກີດຢູ່ໂຮງໝໍ ໃຫ້ພໍ່ແມ່ໄປແຈ້ງຕໍ່ນາຍບ້ານບ່ອນທີ່ຕົນຢູ່ ຫລື ບ່ອນທີ່ຕົນໄດ້ຈົດທະບຽນສຳມະໂນຄົວ ເພື່ອຈົດທະບຽນການເກີດຂອງເດັກ.

ໃນກໍລະນີທີ່ເດັກເກີດຢູ່ຕ່າງປະເທດ ໃຫ້ພໍ່ ຫລື ແມ່ ໄປແຈ້ງຕໍ່ສະຖານທູດແຫ່ງ ສປປ ລາວ ຫລື ກົງສູນໃຫຍ່ແຫ່ງ ສປປ ລາວ ປະຈຳປະເທດນັ້ນ ເພື່ອຈົດທະບຽນການເກີດຂອງເດັກ.

ການຈົດທະບຽນການເກີດຂອງເດັກ ໃຫ້ດຳເນີນພາຍໃນກຳນົດ ສາມສິບວັນ ນັບແຕ່ວັນເດັກເກີດເປັນຕົ້ນໄປ.

ນອກຈາກນີ້ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທະບຽນຄອບຄົວ.

**ມາດຕາ 20. ຊື່ ແລະ ນາມສະກຸນຂອງເດັກ**

ເດັກທຸກຄົນ ມີສິດໄດ້ຮັບການຕັ້ງຊື່ ແລະ ນາມສະກຸນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຂອງກົດໝາຍຄອບຄົວ.

**ມາດຕາ 21. ສັນຊາດຂອງເດັກ**

ສັນຊາດຂອງເດັກ ແມ່ນໃຫ້ກຳນົດຕາມສັນຊາດຂອງພໍ່ແມ່ ຖ້າວ່າ ພໍ່ແມ່ ຫາກມີສັນຊາດດຽວກັນ.

ໃນກໍລະນີທີ່ພໍ່ແມ່ ຫາກມີສັນຊາດຕ່າງກັນ ເດັກອາດຈະເອົາສັນຊາດຂອງພໍ່ ຫລື ແມ່ ກໍໄດ້ ໂດຍປະຕິບັດຕາມກົດໝາຍວ່າດ້ວຍສັນຊາດລາວ.

## ໝວດທີ 3
## ການເບິ່ງແຍງລ້ຽງດູເດັກ

**ມາດຕາ 22. ການໃຫ້ຄວາມອົບອຸ່ນແກ່ເດັກ**

ພໍ່ແມ່, ຜູ້ປົກຄອງ, ສະມາຊິກອື່ນໃນຄອບຄົວ, ຍາດພີ່ນ້ອງ, ສັງຄົມ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງໃຫ້ຄວາມອົບອຸ່ນແກ່ເດັກ ດ້ວຍຄວາມໃກ້ຊິດ, ຮັກແພງ, ໃຫ້ຄຳປຶກສາຫາລື, ສຶກສາອົບຮົມ, ຊ່ວຍເຫຼືອ ແລະ ອື່ນໆ ເພື່ອພັດທະນາທາງດ້ານຮ່າງກາຍ, ຈິດໃຈ ແລະມັນສະໝອງຂອງເດັກ.

ພໍ່ ແລະແມ່ທີ່ຢ່າຮ້າງກັນ ຕ້ອງຮັກສາສາຍສຳພັນກັບລູກ ໂດຍສະເພາະເດັກທີ່ຍັງບໍ່ທັນບັນລຸນິຕິພາວະ.

**ມາດຕາ 23. ຜູ້ປົກຄອງເດັກ**

ເດັກທີ່ຂາດພໍ່ແມ່ ມີສິດໄດ້ຮັບການເບິ່ງແຍງລ້ຽງດູຈາກຜູ້ປົກຄອງທີ່ຖືກແຕ່ງຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 43 ຫາ 46 ຂອງກົດໝາຍຄອບຄົວ.

**ມາດຕາ 24. ພັນທະຂອງພໍ່ແມ່ ຫລື ຜູ້ປົກຄອງໃນການເບິ່ງແຍງລ້ຽງດູ**

ພໍ່ ແລະແມ່ ມີພັນທະຮ່ວມກັນໃນການເບິ່ງແຍງລ້ຽງດູລູກ ໂດຍບໍ່ຂຶ້ນກັບສະພາບການເປັນຜົວເມຍກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35 ຂອງກົດໝາຍຄອບຄົວ.

ພໍ່ແມ່ ຫລື ຜູ້ປົກຄອງເດັກ ຕ້ອງມີພັນທະ ສ້າງ ແລະ ສະໜອງເງື່ອນໄຂທີ່ດີໃຫ້ແກ່ເດັກ ເພື່ອໃຫ້ເດັກມີສຸຂະພາບແຂງແຮງ, ມີການພັດທະນາ ແລະມີອະນາຄົດທີ່ດີ. ຖ້າວ່າ ພໍ່ແມ່ ຫລື ຜູ້ປົກຄອງ ປະສົບບັນຫາໃນການລ້ຽງດູເດັກ ແລະບໍ່ສາມາດແກ້ໄຂບັນຫາດ້ວຍຕົນເອງໄດ້ ກໍສາມາດຂໍຄຳປຶກສາ ແລະການຊ່ວຍເຫລືອ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 25. ຄວາມຮັບຜິດຊອບຂອງລັດໃນການລ້ຽງດູເດັກ**

ລັດ ຮັບຜິດຊອບເບິ່ງແຍງລ້ຽງດູເດັກ ຊຶ່ງບໍ່ມີພໍ່ແມ່ ຫລື ຜູ້ປົກຄອງລ້ຽງດູ ຫລື ພໍ່ແມ່ປະຖິ້ມ ດ້ວຍການສ້າງ ແລະ ຂະຫຍາຍສູນເດັກກຳພ້າ, ໂຮງຮຽນກິນນອນ ແລະ ອື່ນໆ.

## ພາກທີ III
## ການພັດທະນາເດັກ

### ໝວດທີ 1
### ການສຶກສາສຳລັບເດັກ

**ມາດຕາ 26. ການສົ່ງເສີມການສຶກສາໃຫ້ແກ່ເດັກ**

ລັດ ມີນະໂຍບາຍສົ່ງເສີມ ແລະສ້າງເງື່ອນໄຂໃຫ້ເດັກໄດ້ຮັບການສຶກສາ ດ້ວຍການຂະຫຍາຍໂຮງຮຽນສາມັນສຶກສາ, ອາຊີວະສຶກສາ, ວິຊາຊີບ, ສູນຝຶກສີມືແຮງງານທາງພາກລັດ ແລະ ເອກະຊົນ, ສະໜອງຄູ, ປຶ້ມຕຳລາຮຽນ, ອຸປະກອນການຮຽນ, ການສອນ ໃຫ້ນັບມື້ນັບພຽງພໍ ເພື່ອພັດທະນາເດັກໃຫ້ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດ, ພອນສະຫວັນ ແນໃສ່ໃຫ້ເດັກເປັນຜູ້ສືບທອດພາລະກິດປົກປັກຮັກສາ ແລະພັດທະນາປະເທດຊາດຢ່າງມີປະສິດທິພາບ.

ພໍ່ແມ່, ຜູ້ປົກຄອງເດັກ ແລະການຈັດຕັ້ງສັງຄົມ ມີພັນທະສົ່ງເສີມ ແລະສ້າງເງື່ອນໄຂໃຫ້ເດັກໄດ້ເຂົ້າໂຮງຮຽນ ແລະ ແກ້ໄຂອຸປະສັກຂັດຂວາງເດັກໃນການໄດ້ຮັບການສຶກສາ.

**ມາດຕາ 27. ໂຮງຮຽນເພື່ອນເດັກ**

ລັດ ມີນະໂຍບາຍ ສ້າງໂຮງຮຽນເພື່ອນເດັກ ຊຶ່ງເປັນທີ່ນິຍົມ ແລະດູດດຶງເດັກ ໃຫ້ມັກການຮໍ່າຮຽນ. ໂຮງຮຽນເພື່ອນເດັກ ເປັນບ່ອນສ້າງສະພາບແວດລ້ອມທີ່ດີໃຫ້ແກ່ການຮໍ່າຮຽນ, ການສຶກສາຄົ້ນຄວ້າ ສໍາລັບເດັກ, ໄດ້ຮັບການເອົາໃຈໃສ່, ປຶກສາຫາລື, ຊ່ວຍເຫຼືອຈາກຄູ, ມີຄວາມຮັກແພງສາມັກຄີລະຫວ່າງນັກຮຽນດ້ວຍກັນ, ປົກປ້ອງເດັກ ຈາກການໃຊ້ຄວາມຮຸນແຮງ, ການລົງໂທດທາງຮ່າງກາຍ ຫລື ໃຊ້ຄໍາເວົ້າ ຫລື ການກະທໍາທີ່ບໍ່ເໝາະສົມ ຊຶ່ງເປັນການແຕະຕ້ອງເຖິງກຽດສັກສີຂອງເດັກ, ປາສະຈາກການຈໍາແນກ ຫລື ການລໍາອຽງ ແລະການເຮັດວຽກ ຫລື ອອກແຮງງານເກີນຂອບເຂດ.

**ມາດຕາ 28. ການສົ່ງເສີມເດັກທີ່ມີພອນສະຫວັນ**

ລັດ, ສັງຄົມ ແລະຄອບຄົວ ຕ້ອງສົ່ງເສີມເດັກທີ່ມີພອນສະຫວັນ ດ້ວຍການສ້າງເງື່ອນໄຂອັນສະດວກ ໃຫ້ເດັກໄດ້ໃຊ້ຄວາມສາມາດ ທາງດ້ານພອນສະຫວັນຂອງຕົນຢ່າງເຕັມສ່ວນ ໄປຄຽງຄູ່ກັບການສຶກສາທົ່ວໄປ.

**ມາດຕາ 29. ການສຶກສາສໍາລັບເດັກທີ່ດ້ອຍໂອກາດ**

ລັດ ມີນະໂຍບາຍກ່ຽວກັບການຮຽນ ໂດຍບໍ່ເສັຍຄ່າ, ສະໜອງການຊ່ວຍເຫລືອທາງດ້ານວັດຖຸທີ່ຈໍາເປັນ ແລະຍົກເວັ້ນຄ່າທໍານຽມຕ່າງໆໃຫ້ແກ່ເດັກທີ່ດ້ອຍໂອກາດ, ເດັກທີ່ຢູ່ເຂດຫ່າງໄກສອກຫລີກ ແລະເດັກທີ່ມາຈາກຄອບຄົວທຸກຍາກ. ການສຶກສາສໍາລັບເດັກດັ່ງກ່າວຢ່າງໜ້ອຍ ໃຫ້ໄດ້ຮຽນຈົບຊັ້ນປະຖົມ ແລະຝຶກອົບຮົມວິຊາຊີບ.

**ມາດຕາ 30. ການສຶກສາສໍາລັບເດັກພິການ**

ເດັກພິການ ມີສິດໄດ້ຮັບການສຶກສາ ແລະການຝຶກອົບຮົມວິຊາຊີບ ໂດຍປາສະຈາກການຈໍາແນກໂດຍຜ່ານນະໂຍບາຍການສຶກສາ ສໍາລັບໝົດທຸກຄົນ.

ລັດ ສົ່ງເສີມ ແລະສ້າງເງື່ອນໄຂໃຫ້ເດັກພິການໄດ້ຮັບການສຶກສາ ແລະ ຊຸກຍູ້ໃຫ້ພາກເອກະຊົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງຕ່າງໆ ທັງພາຍໃນ ແລະຕ່າງປະເທດ ຊ່ວຍເຫຼືອການສຶກສາ ສໍາລັບເດັກພິການ.

**ມາດຕາ 31. ການສຶກສາສໍາລັບເດັກທີ່ໄດ້ຮັບຜົນກະທົບຈາກໂຣກເອດ ຫຼື ເຊື້ອເອສໄອວີ**

ລັດ ສ້າງເງື່ອນໄຂສໍາລັບເດັກທີ່ໄດ້ຮັບຜົນກະທົບຈາກ ໂຣກເອດ ຫຼື ເຊື້ອ ເອສໄອວີ ໃຫ້ໄດ້ຮັບການສຶກສາ ແລະ ເຂົ້າຮ່ວມກິດຈະກໍາຕ່າງໆໃນໂຮງຮຽນ ໂດຍບໍ່ມີການຈໍາແນກ.

ຫ້າມເປີດເຜີຍການເປັນໂຣກເອດ ຫລື ການຕິດເຊື້ອເອສໄອວີ ຂອງເດັກ.

## ໝວດທີ 2
## ການມີສ່ວນຮ່ວມຂອງເດັກ

**ມາດຕາ 32. ການມີສ່ວນຮ່ວມຂອງເດັກໃນກິດຈະກຳຕ່າງໆ**

ເດັກທຸກຄົນ ມີສິດເຂົ້າຮ່ວມໃນກິດຈະກຳຕ່າງໆ ທີ່ເປັນການພັດທະນາທາງຮ່າງກາຍ, ຈິດໃຈ ແລະ ມັນສະໝອງ ເຊັ່ນ: ກິດຈະກຳທາງດ້ານການສຶກສາ, ວັດທະນະທຳ-ສັງຄົມ, ສິນລະປະ ວັນນະຄະດີ, ກິລາກາຍະກຳ ແລະການມ່ວນຊື່ນຂອງເດັກ ຢູ່ໃນຊຸມຊົນ.

ໂຮງຮຽນ, ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບໃນການວາງແຜນ ແລະຈັດສະຖານທີ່ສຳລັບກິດຈະກຳ ທີ່ກຳນົດໄວ້ໃນວັກເທິງນີ້.

**ມາດຕາ 33. ການມີສ່ວນຮ່ວມຂອງເດັກໃນການປະດິດສ້າງ**

ລັດ ມີນະໂຍບາຍສົ່ງເສີມເດັກທຸກຄົນ ໃຫ້ມີການປະດິດສ້າງ ດ້ວຍການສະແດງຜົນງານການປະດິດສ້າງສິ່ງຕ່າງໆຂອງຕົນ ທີ່ເປັນປະໂຫຍດ ແລະເປັນແບບຢ່າງອັນດີໃຫ້ແກ່ເດັກຜູ້ອື່ນ, ສະເໜີຄຳຄິດຄຳເຫັນ ແລະ ມີສ່ວນຮ່ວມໃນສັງຄົມ ໃນການສະແດງຄວາມສາມາດຂອງຕົນອອກດ້ວຍຮູບການຕ່າງໆ.

**ມາດຕາ 34. ການມີສ່ວນຮ່ວມຂອງເດັກໃນການຕົກລົງບັນຫາ**

ເດັກທຸກຄົນ ມີສິດຄົ້ນຄວ້າປະກອບຄຳເຫັນໃນການຕົກລົງບັນຫາຕ່າງໆ ທີ່ຍົກຂຶ້ນມາພິຈາລະນາເປັນຕົ້ນ ບັນຫາທີ່ພົວພັນກັບອະນາຄົດ ແລະຊາຕາກຳຂອງຕົນ. ບຸກຄົນ ແລະການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງອຳນວຍຄວາມສະດວກ ໃຫ້ແກ່ການປະກອບຄຳເຫັນ ແລະພິຈາລະນາຄຳເຫັນດັ່ງກ່າວ ບົນພື້ນຖານການຊັ່ງຊາຕາມອາຍຸ ແລະ ຄວາມສາມາດຂອງເດັກໃນການຈຳແນກຄວາມຖືກຜິດ.

## ພາກທີ IV
## ການປົກປ້ອງ ແລະ ຊ່ວຍເຫລືອເດັກ

## ໝວດທີ 1
## ຄວາມຮັບຜິດຊອບຂອງລັດ ໃນການປົກປ້ອງ ແລະ ຊ່ວຍເຫລືອເດັກ

**ມາດຕາ 35. ນະໂຍບາຍ ກ່ຽວກັບການປົກປ້ອງ ແລະ ຊ່ວຍເຫລືອເດັກ**

ລັດ ມີນະໂຍບາຍສະກັດກັ້ນ ແລະຕ້ານການທາລຸນ, ການຂູດຮີດເດັກ ດ້ວຍການອອກມາດຕະການປົກປ້ອງ ແລະຊ່ວຍເຫລືອເດັກ ທີ່ມີຄວາມສ່ຽງຕໍ່ການທາລຸນ ຫລື ການຂູດຮີດ ໂດຍມອບໃຫ້ກະຊວງແຮງງານ ແລະສະຫວັດດີການສັງຄົມ ເປັນເຈົ້າການ ໂດຍປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເຊັ່ນ:

ສາທາລະນະສຸກ, ສຶກສາ, ຍຸຕິທຳ, ການຕ່າງປະເທດ, ປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ.

ກະຊວງແຮງງານ ແລະສະຫວັດດີການສັງຄົມ ວາງລະບຽບການ ແລະອອກຄຳແນະນຳ ກ່ຽວກັບການປົກປ້ອງ ແລະຊ່ວຍເຫລືອເດັກ, ສ້າງຕັ້ງຄະນະກຳມະການປົກປ້ອງ ແລະຊ່ວຍເຫລືອເດັກ ເພື່ອຈັດຕັ້ງປະຕິບັດ ລວມທັງຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດດັ່ງກ່າວ.

### ມາດຕາ 36. ສິດ ແລະ ໜ້າທີ່ ຂອງຄະນະກຳມະການປົກປ້ອງ ແລະ ຊ່ວຍເຫລືອເດັກ

ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫລືອເດັກ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ຮັບລາຍງານ, ຊອກຮູ້ ແລະນຳໃຊ້ມາດຕະການອັນຮີບດ່ວນ ເພື່ອປົກປ້ອງ ແລະຊ່ວຍເຫລືອເດັກທີ່ຕົກຢູ່ໃນຄວາມສ່ຽງ ແລະ ເດັກທີ່ຕ້ອງການການປົກປ້ອງພິເສດ;
2. ສ້າງເງື່ອນໄຂ ແລະໃຫ້ການຊ່ວຍເຫລືອແກ່ຄອບຄົວຂອງເດັກ ທີ່ຕ້ອງການການປົກປ້ອງພິເສດ ແລະຄອບຄົວທີ່ມີເດັກຕົກຢູ່ໃນສະພາບຄວາມສ່ຽງ ເພື່ອໃຫ້ຄອບຄົວສາມາດແກ້ໄຂບັນຫາດ້ວຍຕົນເອງຢ່າງຖືກຕ້ອງ;
3. ແນະນຳ, ຕິດຕາມ, ກວດກາຢ່າງເປັນປົກກະຕິ ກ່ຽວກັບການເບິ່ງແຍງດູແລ, ຊ່ວຍເຫຼືອເດັກຂອງບັນດາສູນ ຫລື ສະຖານທີ່ທີ່ກ່ຽວຂ້ອງ;
4. ເກັບກຳສະຖິຕິ ກ່ຽວກັບເດັກທີ່ຕ້ອງການການປົກປ້ອງພິເສດ ແລະ ເດັກທີ່ຕົກຢູ່ໃນຄວາມສ່ຽງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ,ສະຫຼຸບສັງລວມການຈັດຕັ້ງປະຕິບັດວຽກງານຂອງ ຕົນ ເພື່ອລາຍງານໃຫ້ຂັ້ນເທິງຊາບ ຢ່າງເປັນປົກກະຕິ.

### ມາດຕາ 37. ນະໂຍບາຍ ກ່ຽວກັບການສ້າງຄອບຄົວໃຫ້ເຂັ້ມແຂງ

ລັດ ສົ່ງເສີມໃຫ້ຄອບຄົວສ້າງຄວາມເຂັ້ມແຂງດ້ວຍຕົນເອງ ແລະມີຄວາມສາມັກຄີຮັກແພງ, ໃຫ້ການຊ່ວຍເຫລືອແກ່ພໍ່ແມ່ ໃນການປະຕິບັດພັນທະເບິ່ງແຍງລ້ຽງດູ ແລະສຶກສາອົບຮົມລູກ, ກຳນົດຄອບຄົວ ແລະເດັກ ທີ່ມີຄວາມອ່ອນແອ ຫລື ຢູ່ໃນຄວາມສ່ຽງສູງ ເພື່ອປົກປ້ອງ ແລະຊ່ວຍເຫລືອ.

ການສ້າງຄອບຄົວໃຫ້ເຂັ້ມແຂງ ມີເນື້ອໃນດັ່ງນີ້ :

1. ໃຫ້ຄວາມຊ່ວຍເຫລືອແກ່ພໍ່ແມ່ ເພື່ອສ້າງຄວາມສາມາດໃນການປະຕິບັດພັນທະ ເບິ່ງແຍງລ້ຽງດູ ແລະ ສຶກສາອົບຮົມເດັກ, ຕອບສະໜອງຄວາມຢູ່ດີກິນດີ ແລະຜົນປະໂຫຍດສູງສຸດຂອງລູກ, ຂອງຄອບຄົວ, ສ້າງຄວາມສາມັກຄີພາຍໃນຄອບຄົວ;
2. ສະກັດກັ້ນ ຜົນກະທົບຈາກພາຍນອກຕໍ່ຄອບຄົວ ແລະເດັກ, ໃຫ້ຄຳແນະນຳ, ຄຳປຶກສາ ແລະ ການຊ່ວຍເຫລືອທີ່ເໝາະສົມແກ່ຄອບຄົວ ແລະເດັກທີ່ມີບັນຫາ;
3. ສ້າງຄວາມຮັບຮູ້ຂອງມວນຊົນກ່ຽວກັບໄພອັນຕະລາຍ ແລະຜົນສະທ້ອນອັນບໍ່ດີຂອງການທາລຸນ ແລະການຂູດຮີດເດັກ.

## ໝວດທີ 2
## ການປົກປ້ອງ ແລະ ຊ່ວຍເຫລືອເດັກທີ່ຕ້ອງການການປົກປ້ອງພິເສດ

### ມາດຕາ 38. ການລາຍງານ

ເພື່ອເກັບກຳສະພາບການຕ່າງໆທີ່ເກີດຂຶ້ນໃນຊຸມຊົນຂອງເດັກ ແລະໃນສັງຄົມ, ຊອກຫາສາເຫດທີ່ພາໃຫ້ເດັກຕົກເປັນບຸກຄົນ ທີ່ຕ້ອງການການປົກປ້ອງພິເສດຢ່າງທົ່ວເຖິງນັ້ນ ຕ້ອງສ້າງຕາໜ່າງປົກປ້ອງເດັກຢ່າງກວ້າງຂວາງ ພາຍໃຕ້ການຊີ້ນຳຂອງຄະນະກຳມະການປົກປ້ອງ ແລະ ຊ່ວຍເຫລືອເດັກ.

ຕາໜ່າງດັ່ງກ່າວ ມີໜ້າທີ່ຕົ້ນຕໍດັ່ງນີ້:

- ຕິດຕາມເບິ່ງເດັກ ທີ່ຂາດຄວາມເອົາໃຈໃສ່ເບິ່ງແຍງລ້ຽງດູ ຫລື ຖືກເອົາລັດເອົາປຽບເດັກ;
- ເກັບກຳຂໍ້ມູນ ແລະສະຖິຕິ ກ່ຽວກັບເດັກທີ່ຕ້ອງການການປົກປ້ອງພິເສດ ແລ້ວລາຍງານໃຫ້ຄະນະກຳມະການປົກປ້ອງ ແລະຊ່ວຍເຫລືອເດັກຢ່າງເປັນປົກກະຕິ;
- ໃຫ້ຄຳປຶກສາ, ແນະນຳ ແກ່ເດັກທີ່ຕ້ອງການການປົກປ້ອງພິເສດ;
- ອຳນວຍຄວາມສະດວກ ແລະປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບວຽກງານປົກປ້ອງ ແລະ ຊ່ວຍເຫລືອເດັກ.

ນອກຈາກນີ້ ບຸກຄົນ ແລະການຈັດຕັ້ງ ຫາກໄດ້ຮູ້, ໄດ້ເຫັນກ່ຽວກັບເຫດການ ທີ່ພາໃຫ້ເດັກຕົກຢູ່ໃນຄວາມສ່ຽງ ທີ່ຈະພາໃຫ້ມີການປົກປ້ອງພິເສດ ຫລື ເດັກທີ່ຕ້ອງການການປົກປ້ອງພິເສດນັ້ນ ຕ້ອງແຈ້ງ ຫລື ລາຍງານເຫດການ ໃຫ້ຄະນະກຳມະການປົກປ້ອງ ແລະຊ່ວຍເຫລືອເດັກ ໂດຍດ່ວນ ຫລື ໃຫ້ອົງການສືບສວນ-ສອບສວນ ຖ້າຫາກເຫັນວ່າເປັນການກະທຳຜິດທາງອາຍາ.

### ມາດຕາ 39. ການກຳນົດວິທີການປົກປ້ອງ ແລະ ຊ່ວຍເຫລືອເດັກ

ພາຍຫລັງໄດ້ພົບເຫັນ ຫລື ຮັບລາຍງານວ່າ ມີເດັກທີ່ຕ້ອງການການປົກປ້ອງພິເສດແລ້ວ ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫລືອເດັກ ຕ້ອງພິຈາລະນາຄົ້ນຄວ້າ ເພື່ອວາງແຜນການ, ກຳນົດຮູບການ ແລະວິທີການຊ່ວຍເຫລືອທີ່ຈຳເປັນແກ່ເດັກ ໂດຍອີງໃສ່ຄຳຄິດຄຳເຫັນ, ອາຍຸ ແລະຄວາມສາມາດຂອງເດັກ ໃນການຈຳແນກຄວາມຖືກຜິດ.

### ມາດຕາ 40. ມາດຕະການປົກປ້ອງຮີບດ່ວນ

ເມື່ອໄດ້ພົບເຫັນ ຫລື ຮັບລາຍງານວ່າ ມີເດັກທີ່ຕ້ອງການການປົກປ້ອງພິເສດ ເພື່ອນຳເອົາເດັກອອກຈາກໄພອັນຕະລາຍນັ້ນ ຄະນະກຳມະການປົກປ້ອງ ແລະຊ່ວຍເຫລືອເດັກ ຕ້ອງນຳໃຊ້ມາດຕະການປົກປ້ອງຮີບດ່ວນ ດັ່ງນີ້:

1. ກວດກາສະຖານທີ່ ທີ່ສົງໄສວ່າມີເດັກທີ່ຕ້ອງການການປົກປ້ອງພິເສດ;
2. ເອົາເດັກອອກຈາກການຄຸ້ມຄອງຂອງພໍ່ແມ່ ຫລື ຜູ້ປົກຄອງ ແລ້ວນຳເອົາເດັກໄປໄວ້ໃນສະຖານທີ່ປອດໄພຊົ່ວຄາວ ຫຼື ສູນຮັບຕ້ອນເດັກ ຖ້າພໍ່ແມ່ ຫລື ຜູ້ປົກຄອງນັ້ນ ຫາກມີບັນຫາ;

3. ໃນກໍລະນີທີ່ເອົາເດັກມາຈາກສະຖານທີ່ອື່ນ ຕ້ອງມອບເດັກໃຫ້ແກ່ພໍ່ແມ່ ຫລື ຜູ້ປົກຄອງ ເບິ່ງແຍງດູແລ ເວັ້ນເສັຍແຕ່ພໍ່ແມ່ ຫລື ຜູ້ປົກຄອງນັ້ນ ຫາກມີບັນຫາ.

## ມາດຕາ 41. ຂັ້ນຕອນດຳເນີນການປົກປ້ອງ ແລະ ຊ່ວຍເຫລືອເດັກ

ໂດຍອີງໃສ່ເງື່ອນໄຂສະພາບແວດລ້ອມຂອງເດັກແຕ່ລະຄົນ ຄະນະກຳມະການປົກປ້ອງ ແລະຊ່ວຍເຫລືອເດັກ ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

1. ເອົາເຂົ້າສູນຮັບຕ້ອນເດັກ;
2. ໃຫ້ຄຳປຶກສາ, ຮັກສາສຸຂະພາບ, ສຶກສາຮ່ຳຮຽນ, ຝຶກອົບຮົມວິຊາຊີບ ແລະໃຫ້ການບໍລິການອື່ນໆທີ່ຈຳເປັນ ເພື່ອຊ່ວຍຟື້ນຟູສະພາບທາງດ້ານຮ່າງກາຍ ແລະຈິດໃຈຂອງເດັກ ໃຫ້ສາມາດກັບເຂົ້າສູ່ສັງຄົມຄືນໃໝ່;
3. ຊອກຫາພໍ່ແມ່ ຫລື ຜູ້ປົກຄອງເດັກ ແລະສົ່ງເດັກຄືນໃຫ້ແກ່ຄອບຄົວ;
4. ໃຫ້ຄວາມຊ່ວຍເຫລືອ ແລະຄຳແນະນຳແກ່ພໍ່ແມ່ ຫລື ຜູ້ປົກຄອງເດັກ ປະຕິບັດພັນທະລ້ຽງດູ ແລະສຶກສາອົບຮົມລູກໃຫ້ດີ, ຊ່ວຍເຫລືອໃນການສ້າງລາຍໄດ້, ໃຫ້ການຊ່ວຍເຫລືອທາງດ້ານການເງິນ ແລະອື່ນໆທີ່ຈຳເປັນ;
5. ຕິດຕາມ ແລະຢ້ຽມຢາມເຮືອນທີ່ເດັກອາໄສຢູ່ເປັນປະຈຳ ເພື່ອກວດກາຄຸນນະພາບຂອງການເບິ່ງແຍງລ້ຽງດູເດັກຂອງພໍ່ແມ່ ຫລື ຜູ້ປົກຄອງ.

## ມາດຕາ 42. ທາງເລືອກ ສຳລັບການເບິ່ງແຍງລ້ຽງດູເດັກ

ການເບິ່ງແຍງລ້ຽງດູເດັກ ມີຫລາຍທາງເລືອກ, ການພິຈາລະນາກ່ຽວກັບການນຳໃຊ້ທາງເລືອກນັ້ນຕ້ອງອີງໃສ່ເງື່ອນໄຂ ດັ່ງນີ້:

1. ຜົນປະໂຫຍດສູງສຸດຂອງເດັກ ຕ້ອງຖືເປັນປັດໃຈຕົ້ນຕໍໃນການພິຈາລະນາ;
2. ຜູ້ປົກຄອງທີ່ຖືກແຕ່ງຕັ້ງ ຕ້ອງມາຈາກສະມາຊິກພາຍໃນຄອບຄົວ ຫລື ຍາດໃກ້ຊິດ ທີ່ຢູ່ໃກ້ກັບເດັກ ເວັ້ນເສຍແຕ່ຫາກຂັດກັບຜົນປະໂຫຍດສູງສຸດຂອງເດັກ;
3. ຄວາມຈຳເປັນໃນການປົກປັກຮັກສາວັດທະນະທຳ, ພາສາ, ສາສະໜາ ແລະເຊື້ອຊາດຂອງເດັກ;
4. ການຄຸ້ມຄອງເດັກຢູ່ສະຖານທີ່ເບິ່ງແຍງລ້ຽງດູເດັກເຊັ່ນ: ສູນເດັກກຳພ້າ, ໂຮງຮຽນກິນນອນ ຫລື ສະຖາບັນອື່ນໆນັ້ນ ຕ້ອງຖືເປັນທາງເລືອກສຸດທ້າຍ;
5. ຄຳເຫັນຂອງເດັກ ຕ້ອງໄດ້ຮັບການພິຈາລະນາ ບົນພື້ນຖານການຊັ່ງຊາ ຕີລາຄາລະດັບອາຍຸ ແລະ ຄວາມສາມາດຂອງເດັກໃນການຈຳແນກຄວາມຖືກຜິດ;
6. ເດັກທີ່ໄດ້ຮັບຜົນກະທົບຈາກໂຣກເອດ ຫລື ເຊື້ອເອສໄອວີ ຕ້ອງໄດ້ຮັບການເບິ່ງແຍງລ້ຽງດູ ຈາກຄອບຄົວ, ບໍ່ຄວນແຍກເດັກອອກຢູ່ໂດດດ່ຽວຈາກເດັກຜູ້ອື່ນ ແລະສັງຄົມ.

**ມາດຕາ 43. ການຕິດຕາມ, ກວດກາຄືນ ທາງເລືອກ**

ຄະນະກຳມະການປົກປ້ອງ ແລະຊ່ວຍເຫລືອເດັກ, ອົງການປົກຄອງບ້ານ ຕ້ອງຕິດຕາມ ແລະ ກວດກາຄືນການປະຕິບັດທາງເລືອກ ທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດຫມາຍສະບັບນີ້ ເພື່ອຮັບປະກັນໃຫ້ເດັກໄດ້ຮັບການປະຕິບັດທາງເລືອກຢ່າງເຕັມສ່ວນ, ໄດ້ຮັບການເບິ່ງແຍງລ້ຽງດູ ແລະ ປົກປ້ອງຢ່າງພຽງພໍ.

ສູນ ຫລື ສະຖານທີ່ອື່ນ ທີ່ຮັບເດັກເຂົ້າມາເບິ່ງແຍງລ້ຽງດູ ຕ້ອງຕິດຕາມ, ກວດກາຄືນ ການປະຕິບັດວຽກງານຂອງຕົນຢູ່ສະເໝີ ເພື່ອຮັບປະກັນໃຫ້ເດັກກັບຄືນສູ່ສັງຄົມຢ່າງມີປະສິດທິຜົນໂດຍໄວ.

## ໝວດທີ 3
## ການສຳພາດເດັກທີ່ເປັນຜູ້ຖືກເຄາະຮ້າຍ ແລະ ເປັນພະຍານ

**ມາດຕາ 44. ສິດຂອງເດັກທີ່ເປັນຜູ້ຖືກເຄາະຮ້າຍ ແລະ ເປັນພະຍານ**

ເດັກທີ່ເປັນຜູ້ຖືກເຄາະຮ້າຍ ແລະ ເປັນພະຍານໃນການດຳເນີນຄະດີອາຍາ ມີສິດດັ່ງນີ້:

1. ໄດ້ຮັບການເຄົາລົບທາງດ້ານກຽດສັກສີ ແລະ ຄຸນຄ່າຂອງມະນຸດ;
2. ອອກຄຳເຫັນ ຊຶ່ງຕ້ອງໄດ້ຮັບການພິຈາລະນາ ບົນພື້ນຖານການຊັ່ງຊາລະດັບອາຍຸ ແລະ ຄວາມສາມາດຂອງເດັກໃນການຈຳແນກຄວາມຖືກຜິດ;
3. ໄດ້ຮັບການຊ່ວຍເຫລືອຈາກພໍ່ແມ່, ຜູ້ປົກຄອງ ຫລື ຜູ້ປົກປ້ອງທາງກົດໝາຍໃນທຸກຂັ້ນຕອນຂອງການດຳເນີນຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເດັກ;
4. ໄດ້ຮັບການຮັກສາຄວາມລັບ;
5. ໄດ້ຮັບການປົກປ້ອງຈາກການບັງຄັບ, ຂົ່ມຂູ່ ຫລື ອັນຕະລາຍທຸກຮູບແບບ ລວມທັງສະມາຊິກຄອບຄົວຂອງຕົນ;
6. ໄດ້ຮັບສິດອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍການພັດທະນາ ແລະປົກປ້ອງແມ່ຍິງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 45. ການສຳພາດເດັກ**

ຄະດີ ທີ່ມີເດັກເປັນຜູ້ຖືກເຄາະຮ້າຍ ຫລື ເປັນພະຍານ ຕ້ອງແມ່ນເຈົ້າໜ້າທີ່ ຂອງອົງການສືບສວນ-ສອບສວນ ແລະອົງການໄອຍະການປະຊາຊົນ ທີ່ໄດ້ຜ່ານການຝຶກອົບຮົມສະເພາະເປັນຜູ້ສຳພາດ ໂດຍປະສານສົມທົບກັບນັກສັງຄົມສົງເຄາະ.

ໃນການສຳພາດນັ້ນ ອົງການສືບສວນ-ສອບສວນ ແລະ ອົງການໄອຍະການປະຊາຊົນ ຕ້ອງປະຕິບັດດັ່ງນີ້:

1. ມີວິທີການທີ່ນິ້ມນວນ ແລະ ເປັນມິດຕໍ່ເດັກທີ່ເປັນຜູ້ຖືກເຄາະຮ້າຍ ຫລື ເປັນພະຍານ;
2. ໃຫ້ພໍ່ແມ່, ຜູ້ປົກຄອງ ຫລື ຜູ້ປົກປ້ອງ ເຂົ້າຮ່ວມກັບເດັກທຸກຄັ້ງ ໃນເວລາສຳພາດ;
3. ໃຫ້ມີຫ້ອງສຳພາດເດັກສະເພາະ ໂດຍປາສະຈາກການລົບກວນ;

4. ຖາມເດັກດ້ວຍຄຳເວົ້າທີ່ເຂົ້າໃຈງ່າຍ ແລະ ເໝາະສົມກັບອາຍຸ ແລະ ຄວາມສາມາດຂອງເດັກ ໃນການຈຳແນກຄວາມຖືກຜິດ;
5. ມີວິທີການທີ່ເໝາະສົມ ເພື່ອບໍ່ໃຫ້ເດັກມີການຕິດຕໍ່ພົວພັນ ກັບ ຜູ້ຖືກຫາ ຫລື ຈຳເລີຍ ໃນໄລຍະເວລາທີ່ສຳພາດ.

## ໝວດທີ 4
## ການສະກັດກັ້ນ ແລະ ການບຳບັດ ຟື້ນຟູ ເດັກຕິດສິ່ງເສບຕິດ

### ມາດຕາ 46. ການສະກັດກັ້ນການຕິດສິ່ງເສບຕິດ

ລັດ ມີນະໂຍບາຍ, ວາງລະບຽບກົດໝາຍ ສະກັດກັ້ນການຕິດສິ່ງເສບຕິດ ເຊັ່ນ: ຢາເສບຕິດ, ເຫລົ້າ, ເບຍ ຫລື ສິ່ງມຶນເມົາອື່ນໆ ແລະຊຸກຍູ້ໃຫ້ສັງຄົມ ແລະຄອບຄົວເຂົ້າຮ່ວມຢ່າງຕັ້ງໜ້າ ໃນການສະກັດກັ້ນດັ່ງກ່າວ ພ້ອມກັນນັ້ນ ກໍມີວິທີການສຶກສາອົບຮົມ, ຍົກສູງຄວາມຮັບຮູ້ ແລະສະຕິກ່ຽວກັບຄວາມເປັນອັນຕະລາຍຂອງສິ່ງເສບຕິດ.

### ມາດຕາ 47. ການບຳບັດ ຟື້ນຟູເດັກຕິດສິ່ງເສບຕິດ

ລັດ ມີນະໂຍບາຍ, ສ້າງເງື່ອນໄຂ, ສິ່ງອຳນວຍ ແລະຈັດຕັ້ງປິ່ນປົວ, ບຳບັດ, ຟື້ນຟູ ແລະສຶກສາອົບຮົມເດັກຕິດສິ່ງເສບຕິດ ໄປຄຽງຄູ່ກັບການຝຶກວິຊາຊີບໂດຍຊຸກຍູ້ໃຫ້ມີການເຂົ້າຮ່ວມຂອງສັງຄົມ, ໂຮງຮຽນ ແລະ ຄອບຄົວ.

ການປິ່ນປົວ ແລະຮັກສາເດັກຕິດສິ່ງເສບຕິດ ຢູ່ໂຮງໝໍ ຫລື ສູນບຳບັດຟື້ນຟູນັ້ນ ໃຫ້ຖືວ່າເປັນທາງເລືອກສຸດທ້າຍ ແລະບໍ່ໃຫ້ເກີນກຳນົດເວລາທີ່ຈຳເປັນໃນການບຳບັດ ແລະ ຟື້ນຟູ.

ການຮັບເດັກຕິດສິ່ງເສບຕິດ ເຂົ້າໃນສູນບຳບັດ ຟື້ນຟູ ຕ້ອງປະຕິບັດຕາມລະບຽບການຢ່າງເຂັ້ມງວດ ໂດຍໄດ້ຮັບອະນຸຍາດຈາກຄະນະກຳມະການປົກປ້ອງ ແລະຊ່ວຍເຫລືອເດັກ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 48. ຂໍ້ຫ້າມສຳລັບເດັກ

ຂໍ້ຫ້າມພື້ນຖານສຳລັບເດັກ ມີດັ່ງນີ້:

- ການເສບຢາເສບຕິດ, ການດື່ມເຫລົ້າ, ເບຍ , ການສູບຢາ ແລະ ສິ່ງເສບຕິດອື່ນໆ;
- ການບໍລິການຢູ່ຫ້ອງບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານກິນດື່ມ;
- ການໃຊ້ບໍລິການຢູ່ຫ້ອງບັນເທີງ, ເຮືອນພັກ, ໂຮງແຮມ, ຮ້ານກິນດື່ມໃນທາງທີ່ບໍ່ຖືກຕ້ອງ ເຊັ່ນ: ເພື່ອເສບຢາເສບຕິດ, ດື່ມສິ່ງມຶນເມົາ;

- ການມົ້ວສຸມສິ່ງລາມົກ, ອະນາຈານຕ່າງໆ;
- ການຫລິ້ນເກມນອກຫລັກສູດການຮຽນ-ການສອນ ໃນເວລາເຂົ້າໂຮງຮຽນ;
- ການຫລິ້ນການພະນັນທຸກປະເພດ;
- ການຖືອາວຸດ ຫລື ວັດຖຸລະເບີດທຸກຊະນິດ;
- ຂໍ້ຫ້າມອື່ນໆທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 49. ຂໍ້ຫ້າມສຳລັບພໍ່ແມ່, ຜູ້ປົກຄອງ ແລະ ບຸກຄົນອື່ນ**

ຂໍ້ຫ້າມສຳລັບພໍ່ແມ່, ຜູ້ປົກຄອງ ແລະ ບຸກຄົນອື່ນ ມີດັ່ງນີ້:

- ການຂັດຂວາງບໍ່ໃຫ້ເດັກໄປປິ່ນປົວ, ສັກຢາກັນພະຍາດ, ສຶກສາຮ່ຳຮຽນ ຫລື ປະກອບສ່ວນເຂົ້າໃນກິດຈະກຳຕ່າງໆທີ່ເປັນການພັດທະນາທາງຮ່າງກາຍ, ຈິດໃຈ, ມັນສະໝອງ, ຄວາມຮູ້ ແລະ ຄວາມສາມາດຂອງເດັກ;
- ການທຳຮ້າຍຮ່າງກາຍ ແລະ ປ້ອຍດ່າຢ່າງຮຸນແຮງຕໍ່ເດັກ;
- ການປະພຶດທີ່ເປັນແບບຢ່າງອັນບໍ່ດີແກ່ເດັກ;
- ການໃຊ້ເດັກໄປຊື້, ໂຄສະນາສິ່ງເສບຕິດ, ສິ່ງມຶນເມົາ;
- ການອະນຸຍາດໃຫ້ເດັກເຂົ້າໄປໃຊ້ບໍລິການ ແລະບໍລິການໃນຫ້ອງບັນເທີງ, ເຮືອນພັກ, ໂຮງແຮມ ແລະສະຖານທີ່ການພະນັນ;
- ການອະນຸຍາດໃຫ້ເດັກເຂົ້າຮ້ານກິນດື່ມ ທີ່ບໍລິການປະເພດເຫລົ້າ, ເບຍ ຫລື ເຄື່ອງດື່ມ ທີ່ມີສິ່ງມຶນເມົາ ຂອງຕົນ;
- ການອະນຸຍາດໃຫ້ເດັກເຂົ້າມົ້ວສຸມໃນສິ່ງລາມົກ ແລະ ອະນາຈານ;
- ການຕິດຕັ້ງປ້າຍໂຄສະນາເຫລົ້າ, ເບຍ, ຢາສູບ ຫລື ສິ່ງມຶນເມົາອື່ນໆຢູ່ໃກ້ໂຮງຮຽນ ຫລື ໃນເຂດຊຸມຊົນຂອງເດັກ;
- ຂໍ້ຫ້າມອື່ນໆທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

# ພາກທີ V
# ການແກ້ໄຂເດັກທີ່ມີບັນຫາ

## ໝວດທີ 1
## ເດັກກະທຳຜິດກົດໝາຍ

**ມາດຕາ 50. ເດັກທີ່ບໍ່ທັນເຖິງກະສຽນອາຍຸທາງອາຍາ**

ເດັກທີ່ມີອາຍຸຕ່ຳກວ່າ ສິບຫ້າ ປີ ໃນເວລາກະທຳຜິດ ຈະບໍ່ຖືວ່າເປັນຜູ້ກະທຳຜິດທາງອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງກົດໝາຍອາຍາ.

**ມາດຕາ 51. ສິດຂອງເດັກກະທຳຜິດກົດໝາຍ**

ໃນການດຳເນີນຄະດີອາຍາ ເດັກທີ່ເປັນຜູ້ຖືກຫາ ຫລື ເປັນຈຳເລີຍ ມີສິດດັ່ງນີ້:

1. ໄດ້ຮັບການພິຈາລະນາ ນອກຂະບວນການຍຸຕິທຳ ໃນກໍລະນີທີ່ການກະທຳນັ້ນຫາກບໍ່ເປັນການກະທຳຜິດທີ່ຮ້າຍແຮງ;
2. ໄດ້ຮັບຊາບຂໍ້ກ່າວຫາ ແລະ ສິດໃນການຕໍ່ສູ້ຄະດີ;
3. ໄດ້ຮັບການຊ່ວຍເຫລືອທາງດ້ານກົດໝາຍຈາກທະນາຍຄວາມ ຫລື ຜູ້ປົກປ້ອງທີ່ຖືກຕ້ອງຕາມກົດໝາຍ ແລະ ມີພໍ່ແມ່ ຫລື ຜູ້ປົກຄອງ ເຂົ້າຮ່ວມໃນທຸກຂັ້ນຕອນຂອງການດຳເນີນຄະດີອາຍາ;
4. ໄດ້ຮັບການປະຕິບັດຢ່າງເໝາະສົມ ໂດຍບໍ່ມີການນາບຂູ່, ບັງຄັບ ແລະການໃຊ້ຄຳເວົ້າທີ່ຫຍາບຊ້າ ໃນທຸກຂັ້ນຕອນຂອງການດຳເນີນຄະດີອາຍາ;
5. ໄດ້ຮັບການປົກປ້ອງ ແລະ ຄຸ້ມຄອງຄວາມປອດໄພ ຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ;
6. ໄດ້ຮັບການປົກປ້ອງທາງດ້ານຄວາມລັບ ໃນການດຳເນີນຄະດີ ເປັນຕົ້ນ ກ່ຽວກັບປະຫວັດ ແລະ ຂໍ້ມູນສ່ວນຕົວ;
7. ໄດ້ຮັບສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຕ່າງໆ.

## ໝວດທີ 2
## ການແກ້ໄຂຄະດີເດັກໂດຍບໍ່ສົ່ງໃຫ້ສານຕັດສິນ

**ມາດຕາ 52. ການກະທຳຜິດຂອງເດັກທີ່ບໍ່ສົ່ງໃຫ້ສານ**

ການກະທຳຜິດຂອງເດັກທີ່ບໍ່ສົ່ງໃຫ້ສານຕັດສິນ ແມ່ນການກະທຳຜິດໃນສະຖານ ລະຫຸໂທດ ແລະ ໂທສານຸໂທດ ທີ່ບໍ່ເປັນອັນຕະລາຍຮ້າຍແຮງ ຊຶ່ງກົດໝາຍກຳນົດໂທດຕັດອິດສະລະພາບຕ່ຳກວ່າ ສາມ ປີ ລົງມາ.

**ມາດຕາ 53. ອົງການທີ່ມີສິດແກ້ໄຂ**

ອົງການທີ່ມີສິດແກ້ໄຂຄະດີອາຍາຂອງເດັກ ທີ່ບໍ່ສົ່ງໃຫ້ສານຕັດສິນ ມີດັ່ງນີ້ :

1. ໜ່ວຍໄກ່ເກັ່ຍຄະດີເດັກຂັ້ນບ້ານ ;
2. ຫ້ອງການຍຸຕິທຳເມືອງ, ເທດສະບານ;
3. ອົງການສືບສວນ-ສອບສວນ;
4. ອົງການໄອຍະການປະຊາຊົນ.

ໃນກໍລະນີທີ່ບໍ່ທັນໄດ້ສ້າງຕັ້ງໜ່ວຍໄກ່ເກັ່ຍຄະດີເດັກຂັ້ນບ້ານ ໃຫ້ໜ່ວຍໄກ່ເກັ່ຍຂໍ້ຂັດແຍ່ງຂັ້ນບ້ານ ເປັນຜູ້ຮັບຜິດຊອບ.

**ມາດຕາ 54. ວິທີແກ້ໄຂຄະດີໂດຍບໍ່ສົ່ງໃຫ້ສານ**

ການແກ້ໄຂຄະດີເດັກໂດຍບໍ່ສົ່ງໃຫ້ສານຕັດສິນ ສາມາດນໍາໃຊ້ວິທີການດັ່ງນີ້ :

1. ຕັກເຕືອນ, ສຶກສາອົບຮົມເດັກກະທໍາຜິດ;
2. ໃຫ້ເດັກໄປຂໍອະໄພນໍາຜູ້ຖືກເສຍຫາຍ ດ້ວຍວິທີການອັນເໝາະສົມ;
3. ໄກ່ເກ່ຍລະຫວ່າງເດັກກະທໍາຜິດ ແລະ ຜູ້ຖືກເສຍຫາຍ;
4. ໃຊ້ແທນຄ່າເສັຍຫາຍທີ່ເກີດຈາກການກະທໍາຜິດຂອງເດັກໂດຍພໍ່ແມ່ ຫລື ຜູ້ປົກຄອງ;
5. ເຮັດວຽກໃຫ້ສັງຄົມຕາມຄວາມສາມາດ ແລະເໝາະສົມກັບອາຍຸຂອງເດັກ.

## ໝວດທີ 3
## ການໄກ່ເກ່ຍຄະດີເດັກ

**ມາດຕາ 55. ສິດ ແລະ ໜ້າທີ່ ຂອງໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ**

ໃນກໍລະນີທີ່ບໍ່ສົ່ງຄະດີໃຫ້ສານຕັດສິນ ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ຕັກເຕືອນ, ສຶກສາອົບຮົມ ເດັກກະທໍາຜິດ;
2. ໄກ່ເກ່ຍຄະດີແພ່ງທີ່ພົວພັນກັບເດັກ;
3. ໄກ່ເກ່ຍຄະດີອາຍາທີ່ເດັກເປັນຜູ້ກະທໍາຜິດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 52 ຂອງກົດໝາຍສະບັບນີ້;
4. ຕິດຕາມຊຸກຍູ້ການໃຊ້ແທນຄ່າເສຍຫາຍ;
5. ຕິດຕາມເດັກກະທໍາຜິດ ລວມທັງເດັກທີ່ປະຕິບັດໂທດແລ້ວ.

**ມາດຕາ 56. ສິດ ແລະ ໜ້າທີ່ ຂອງຫ້ອງການຍຸຕິທໍາເມືອງ, ເທດສະບານ ໃນການໄກ່ເກ່ຍຄະດີເດັກ**

ຫ້ອງການຍຸຕິທໍາເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ໃນການສຶກສາອົບຮົມ, ປະນີປະນອມ ແລະ ໄກ່ເກ່ຍຄະດີເດັກ ທີ່ສົ່ງມາຈາກໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ ເນື່ອງຈາກໜ່ວຍໄກ່ເກ່ຍດັ່ງກ່າວບໍ່ສາມາດແກ້ໄຂໄດ້ຕາມມາດຕາ 55 ຂອງກົດໝາຍສະບັບນີ້ ແລະ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 79 ແລະ 80 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ.

ໃນກໍລະນີທີ່ບໍ່ສາມາດຕົກລົງໄກ່ເກ່ຍກັນໄດ້ ຄູ່ຄວາມມີສິດໄປຮ້ອງຟ້ອງຕໍ່ສານ.

**ມາດຕາ 57. ຫລັກການຂອງການໄກ່ເກ່ຍຄະດີເດັກ**

ໃນການໄກ່ເກ່ຍຄະດີເດັກ ຕ້ອງປະຕິບັດຕາມຫລັກການດັ່ງນີ້ :

1. ຕ້ອງມີຂໍ້ມູນ, ຫລັກຖານຮັດກຸມ, ໜັກແໜ້ນ ແລະເດັກກະທໍາຜິດ ຮັບຮູ້ຕໍ່ການກະທໍາຜິດຂອງຕົນ;
2. ຕ້ອງມີການເຂົ້າຮ່ວມຂອງເດັກກະທໍາຜິດ, ພໍ່ແມ່ ຫລື ຜູ້ປົກຄອງ ທຸກຄັ້ງ;
3. ຜູ້ໄກ່ເກ່ຍຕ້ອງວາງຕົວເປັນກາງ, ມີທ່າທີນິ້ມນວນ ແລະ ຄໍານຶງເຖິງຜົນປະໂຫຍດຂອງເດັກ.

## ໝວດທີ 4
## ການສືບສວນ-ສອບຖາມເດັກ

**ມາດຕາ 58. ສິດ ແລະ ໜ້າທີ່ ຂອງອົງການສືບສວນ-ສອບສວນໃນການດໍາເນີນຄະດີເດັກ**

ການສືບສວນ-ສອບຖາມເດັກ ແມ່ນດໍາເນີນໂດຍອົງການສືບສວນ-ສອບສວນຄະດີເດັກສະເພາະ.

ໃນການດໍາເນີນຄະດີອາຍາຕໍ່ເດັກ ອົງການສືບສວນ-ສອບສວນ ນອກຈາກຈະຕ້ອງປະຕິບັດສິດ ແລະໜ້າທີ່ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະກົດໝາຍອື່ນທີ່ກ່ຽວຂ້ອງແລ້ວ ຍັງມີສິດ ແລະ ໜ້າທີ່ດັ່ງນີ້ :

1. ສະຫລຸບ ແລະ ສົ່ງຄະດີເດັກໄປຍັງໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ ເພື່ອແກ້ໄຂ ຖ້າເຫັນວ່າເປັນການກະທໍາຜິດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 52 ຂອງກົດໝາຍສະບັບນີ້;
2. ໄກ່ເກ່ຍຄະດີເດັກຢູ່ຂັ້ນຂອງຕົນ ພາຍໃນ ສາມສິບວັນ ນັບແຕ່ໄດ້ຮັບຄໍາຮ້ອງຟ້ອງຈາກຄູ່ຄວາມໃນຄະດີທີ່ບໍ່ສາມາດໄກ່ເກ່ຍຢູ່ຫ້ອງການຍຸຕິທໍາເມືອງ, ເທດສະບານໄດ້. ໃນກໍລະນີທີ່ຕົນບໍ່ສາມາດໄກ່ເກ່ຍໄດ້ ກໍສືບສວນ-ສອບຖາມເດັກ, ສະຫລຸບຄະດີ ສົ່ງໃຫ້ໄອຍະການປະຊາຊົນ ເພື່ອພິຈາລະນາສັ່ງຟ້ອງ;
3. ສືບສວນ-ສອບຖາມ ແລະສະຫລຸບຄະດີເດັກ ເພື່ອສົ່ງໃຫ້ໄອຍະການປະຊາຊົນ ພິຈາລະນາສັ່ງຟ້ອງ ໃນກໍລະນີທີ່ກົດໝາຍກໍານົດໂທດຕັດອິດສະລະພາບແຕ່ ສາມປີ ຂຶ້ນໄປ;
4. ຕິດຕາມ, ກວດກາ, ແນະນໍາ ແລະຄຸ້ມຄອງບັນຊີເດັກທີ່ເປັນຜູ້ຖືກຫາ ແລະນັກໂທດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.

**ມາດຕາ 59. ຫລັກການຂອງການສືບສວນ-ສອບຖາມເດັກ**

ໃນການດໍາເນີນຄະດີອາຍາຕໍ່ເດັກ ອົງການສືບສວນ-ສອບສວນ ຕ້ອງນໍາໃຊ້ມາດຕະການສືບສວນ-ສອບສວນ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະຕ້ອງປະຕິບັດຕາມຫລັກການດັ່ງນີ້:

1. ການສືບສວນ-ສອບຖາມເດັກກະທໍາຜິດ ຕ້ອງດໍາເນີນໄປຢ່າງນິ້ມນວນ ແລະເໝາະສົມຕໍ່ເດັກ ໂດຍອີງຕາມໄວອາຍຸ ແລະຄວາມສາມາດຂອງເດັກ ໃນການຈໍາແນກຄວາມຖືກຜິດ;
2. ພໍ່ແມ່, ຜູ້ປົກຄອງ ຫລື ຜູ້ປົກປ້ອງອື່ນ ຕ້ອງເຂົ້າຮ່ວມຕະຫລອດການສືບສວນ-ສອບຖາມ ແລະການເອົາຄໍາໃຫ້ການຂອງເດັກ. ພໍ່ແມ່, ຜູ້ປົກຄອງ ຫລື ຜູ້ປົກປ້ອງ ບໍ່ສິດໃຫ້ການແທນເດັກ ແຕ່ມີສິດສະເໜີບັນຫາທີ່ຕົນເຫັນວ່າບໍ່ເໝາະສົມ;
3. ການເອົາຄໍາໃຫ້ການຂອງເດັກ ຕ້ອງດໍາເນີນຢູ່ໃນຫ້ອງສະເພາະ ດ້ວຍວິທີການເປີດເຜີຍ ໂດຍປາສະຈາກການບັງຄັບ ຫລື ນາບຂູ່ເດັກ, ຫລີກລ່ຽງການໃຊ້ຄໍາເວົ້າທີ່ເປັນການແຕະຕ້ອງເຖິງກຽດສັກສີ ແລະ ຈິດໃຈຂອງເດັກ;
4. ການ ສືບສວນ-ສອບຖາມເດັກແຕ່ລະຄັ້ງ ບໍ່ໃຫ້ໃຊ້ເວລາເກີນເກົ້າສິບນາທີ;

5. ການສືບສວນ-ສອບຖາມໃນຄະດີເດັກ ຕ້ອງໃຫ້ສຳເລັດພາຍໃນ ສາມສິບວັນ ແລະ ສາມາດຕໍ່ໄດ້ເທື່ອລະສາມສິບວັນ ໂດຍການຕົກລົງຂອງໄອຍະການປະຊາຊົນ.

## ໝວດທີ 5
## ການນຳໃຊ້ມາດຕະການສະກັດກັ້ນຕໍ່ເດັກ

**ມາດຕາ 60. ມາດຕະການສະກັດກັ້ນຕໍ່ເດັກ**

ມາດຕະການສະກັດກັ້ນຕໍ່ເດັກ ແມ່ນມາດຕະການທົ່ວໄປ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຄື:

1. ການພາຕົວ;
2. ການກັກຕົວ;
3. ການຈັບຕົວ;
4. ການກັກຂັງພາງ;
5. ການປ່ອຍຕົວພາງ.

**ມາດຕາ 61. ການພາຕົວເດັກ**

ໃນກໍລະນີທີ່ເຈົ້າໜ້າທີ່ສືບສວນ-ສອບສວນ, ໄອຍະການປະຊາຊົນ ຫລື ສານ ໄດ້ຮຽກຕົວເດັກເຖິງສາມຄັ້ງແລ້ວ ແຕ່ກໍຍັງບໍ່ມາໂດຍບໍ່ມີເຫດຜົນ ເດັກກໍຈະຖືກພາຕົວ ພ້ອມດ້ວຍພໍ່ແມ່ ຫລືຜູ້ປົກຄອງ.

**ມາດຕາ 62. ການກັກຕົວເດັກ**

ໃນກໍລະນີທີ່ຈຳເປັນ ເດັກກໍຈະຖືກກັກຕົວບໍ່ເກີນ ສີ່ສິບແປດຊົ່ວໂມງ ຖ້າວ່າການກະທຳຜິດຂອງເດັກນັ້ນ ຫາກເປັນອັນຕະລາຍຮ້າຍແຮງ ຊຶ່ງກົດໝາຍກຳນົດໂທດຕັດອິດສະລະພາບ ແຕ່ສາມປີ ຂຶ້ນໄປ ແລະຕ້ອງມີຫລັກຖານໜັກແໜ້ນ.

ໃນກໍລະນີທີ່ຈຳເປັນຕ້ອງໄດ້ກັກຕົວເດັກ ເຈົ້າໜ້າທີ່ສືບສວນ-ສອບສວນ ຫລື ພະນັກງານສອບສວນຕ້ອງປະຕິບັດຕາມຫລັກການ ດັ່ງນີ້ :

1. ແຈ້ງໃຫ້ເດັກຊາບກ່ຽວກັບເຫດຜົນຂອງການກັກຕົວ ແລະແນະນຳໃຫ້ເດັກຮູ້ກ່ຽວກັບສິດຂອງຜູ້ກ່ຽວຕາມກົດໝາຍ;
2. ແຈ້ງໃຫ້ພໍ່ແມ່, ຜູ້ປົກຄອງເດັກ ຊາບໂດຍທັນທີ ພາຍຫລັງໄດ້ກັກຕົວເດັກ;
3. ຫ້າມໃຊ້ຄວາມຮຸນແຮງທຸກຮູບແບບ, ການນາບຂູ່ດ້ວຍອາວຸດ ຫລື ດ້ວຍສິ່ງອື່ນ, ໃຊ້ຄຳເວົ້າທີ່ຫຍາບຊ້າ, ໝິ່ນປະໝາດ ຕໍ່ເດັກ;
4. ຕ້ອງນຳສົ່ງເດັກໄປຫາແພດທີ່ກ່ຽວຂ້ອງເພື່ອກວດສະພາບຮ່າງກາຍ ແລະຈິດໃຈ ຂອງເດັກຢ່າງລະອຽດ. ຜົນຂອງການກວດຕ້ອງຮັກສາໄວ້ເປັນຄວາມລັບ ເວັ້ນເສັຍແຕ່ມີຄຳສັ່ງຈາກພາກສ່ວນທີ່ມີສິດໜ້າທີ່ກ່ຽວຂ້ອງເທົ່ານັ້ນ;

5. ຕ້ອງຮັບປະກັນຄວາມປອດໄພແກ່ເດັກໃນເວລາຢູ່ໃນສະຖານທີ່ກັກຕົວ;
6. ເດັກທີ່ຖືກກັກຕົວ ຕ້ອງເອົາໄວ້ໃນສະຖານທີ່ກັກຕົວເດັກສະເພາະ ແລະແຍກອອກຈາກເພດຕ່າງກັນ.

**ມາດຕາ 63. ການຈັບຕົວເດັກ**

ການຈັບຕົວເດັກ ຕ້ອງມີຄຳສັ່ງເປັນລາຍລັກອັກສອນ ຈາກໄອຍະການປະຊາຊົນ ຫລື ສານເດັກ ເວັ້ນເສຍແຕ່ໃນກໍລະນີທີ່ເປັນການກະທຳຜິດເຊິ່ງໜ້າ ຫລື ຮີບດ່ວນ ແລະ ເປັນການກະທຳຜິດທີ່ຮ້າຍແຮງ.

ໄອຍະການປະຊາຊົນ ແລະ ສານເດັກ ຈະອອກຄຳສັ່ງຈັບຕົວເດັກ ໃນກໍລະນີທີ່ເປັນມາດຕະການທາງເລືອກສຸດທ້າຍເທົ່ານັ້ນ ຊຶ່ງຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

1. ຄົບອົງປະກອບການກະທຳຜິດທາງອາຍາ;
2. ເດັກທີ່ຖືກກ່າວຫາວ່າໄດ້ກະທຳຜິດທາງອາຍາຮ້າຍແຮງ ແລະ ກົດໝາຍກຳນົດໂທດຕັດອິດສະລະພາບ ແຕ່ສາມປີ ຂຶ້ນໄປ;
3. ມີຫລັກຖານຮັດກຸມ ແລະ ໜັກແໜ້ນ;
4. ມີເຫດຜົນທີ່ເຊື່ອໄດ້ວ່າ ເດັກອາດຈະຫລົບໜີ, ທຳລາຍຫລັກຖານ ຫລື ຈະໄປກະທຳຜິດທີ່ຮ້າຍແຮງໃໝ່ອີກ, ໄປທຳຮ້າຍຜູ້ຖືກເສຍຫາຍ, ພະຍານ ຫລື ຖືກຜູ້ອື່ນທຳຮ້າຍ.

ໃນການຈັບຕົວເດັກນັ້ນ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕ້ອງປະຕິບັດຕາມຫລັກການທີ່ໄດ້ກຳນົດໄວ້ໃນມາດຕາ 62 ຂອງກົດໝາຍສະບັບນີ້.

**ມາດຕາ 64. ການກັກຂັງພາງເດັກ**

ການກັກຂັງພາງເດັກ ຕ້ອງອີງໃສ່ເຫດຜົນ ແລະ ເງື່ອນໄຂດັ່ງນີ້:

1. ຕ້ອງມີຄຳສັ່ງເປັນລາຍລັກອັກສອນຈາກໄອຍະການປະຊາຊົນ ຫລື ສານເດັກ ແລະຕ້ອງອີງໃສ່ເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍສະບັບນີ້;
2. ຕ້ອງອະນຸຍາດໃຫ້ພໍ່ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ, ໝູ່ເພື່ອນ ແລະຜູ້ປົກປ້ອງ ເຂົ້າຢ້ຽມຢາມ.

ກຳນົດເວລາຂອງການກັກຂັງພາງເດັກ ບໍ່ໃຫ້ເກີນ ໜຶ່ງເດືອນ ນັບແຕ່ວັນອອກຄຳສັ່ງກັກຂັງພາງເປັນຕົ້ນໄປ. ຖ້າຫາກເຫັນວ່າມີຄວາມຈຳເປັນຕ້ອງໄດ້ສືບສວນ-ສອບຖາມຕໍ່ ໄອຍະການປະຊາຊົນ ຫລື ສານເດັກ ອາດຈະຕໍ່ກຳນົດເວລາການກັກຂັງພາງໃຫ້ອີກຕື່ມໄດ້ເທື່ອລະໜຶ່ງເດືອນ ແຕ່ສູງສຸດບໍ່ໃຫ້ກາຍ ສີ່ເດືອນ ສຳລັບການກະທຳຜິດໃນສະຖານໂທສານຸໂທດ ແລະບໍ່ໃຫ້ເກີນ ແປດເດືອນ ສຳລັບການກະທຳຜິດໃນສະຖານຄະຣຸໂທດ.

**ມາດຕາ 65. ການປ່ອຍຕົວພາງເດັກ**

ການປ່ອຍຕົວພາງເດັກຈາກການກັກຂັງພາງ ຖືເປັນບູລິມະສິດໃນຂະບວນການດຳເນີນຄະດີອາຍາ ໂດຍສະເພາະ ເມື່ອເງື່ອນໄຂຂອງການກັກຂັງພາງຫາກໄດ້ຕົກໄປ. ການປ່ອຍຕົວພາງ ແມ່ນດຳເນີນຕາມຄຳຮ້ອງຂໍຂອງພໍ່ແມ່, ຜູ້ປົກຄອງ ຫລື ຍາດໃກ້ຊິດ ຫລື ໂດຍຫນ້າທີ່ຂອງໄອຍະການປະຊາຊົນ ຫລື ສານເດັກ. ການປ່ອຍຕົວພາງເດັກຖ້າບໍ່ຈຳເປັນ ແມ່ນບໍ່ໃຫ້ມີຫລັກຊັບປະກັນ.

ໃນການປ່ອຍຕົວພາງຕາມຄຳຮ້ອງຂໍຂອງພໍ່ແມ່, ຜູ້ປົກຄອງ ຫລື ຍາດໃກ້ຊິດນັ້ນ ເຈົ້າຫນ້າທີ່ສືບສວນ-ສອບສວນ ຕ້ອງໃຫ້ຄຳເຫັນຕໍ່ຄຳຮ້ອງຂໍປ່ອຍຕົວພາງເດັກ ພາຍໃນກຳນົດເວລາຊາວສີ່ຊົ່ວໂມງ ພາຍຫລັງທີ່ໄດ້ຮັບຄຳຮ້ອງນັ້ນ ເປັນຕົ້ນໄປ ແລ້ວສົ່ງຄຳຮ້ອງດັ່ງກ່າວ ພ້ອມດ້ວຍຄຳເຫັນຂອງຕົນ ໄປໃຫ້ໄອຍະການປະຊາຊົນ ຫລື ສານເດັກ ພິຈາລະນາ ພາຍໃນກຳນົດ ຊາວສີ່ຊົ່ວໂມງ. ຖ້າວ່າໄອຍະການປະຊາຊົນ ຫລື ສານເດັກ ຕົກລົງເຫັນດີໃຫ້ປ່ອຍຕົວເດັກແລ້ວ ກໍຕ້ອງປ່ອຍຕົວພາງເດັກໂດຍທັນທີ.

ເດັກທີ່ຖືກປ່ອຍຕົວພາງ ຕ້ອງຖືກຕິດຕາມຈາກພໍ່ແມ່, ຜູ້ປົກຄອງ ຫລື ຍາດໃກ້ຊິດ ທີ່ໄດ້ຕົກລົງປະກັນຕົວເດັກ.

ສຳລັບການກະທຳຜິດໃນສະຖານຄະຣຸໂທດ ຈະບໍ່ມີການປ່ອຍຕົວພາງ.

## ໝວດທີ 6
## ການດຳເນີນຄະດີເດັກຂອງອົງການໄອຍະການປະຊາຊົນ

**ມາດຕາ 66. ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນໃນການດຳເນີນຄະດີເດັກ**

ໃນການດຳເນີນຄະດີອາຍາຕໍ່ເດັກ ໄອຍະການປະຊາຊົນ ນອກຈາກຈະຕ້ອງປະຕິບັດສິດແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງແລ້ວ ຍັງ ມີສິດ ແລະ ໜ້າທີ່ດັ່ງນີ້ :

1. ວາງມາດຕະການ ໃນຂອບເຂດສິດອຳນາດຂອງຕົນ ເພື່ອປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ;
2. ພິຈາລະນາສົ່ງຄະດີ ໃຫ້ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານເປັນຜູ້ແກ້ໄຂ;
3. ແກ້ໄຂຄະດີຢູ່ຂັ້ນຂອງຕົນດ້ວຍການໄກ່ເກ່ຍ,ຖ້າບໍ່ສຳເລັດ ຈຶ່ງສັ່ງຟ້ອງຕໍ່ສານເດັກ;
4. ພິຈາລະນາອອກຄຳສັ່ງຈັບຕົວ, ກັກຂັງພາງ ໃນກໍລະນີທີ່ຈຳເປັນ ແລະການກະທຳຜິດ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ສາມປີຂຶ້ນໄປ;
5. ພິຈາລະນາອອກຄຳສັ່ງປ່ອຍຕົວພາງ.

ເພື່ອຮັບປະກັນການປະຕິບັດສິດ ແລະໜ້າທີ່ຂອງຕົນ ໄອຍະການປະຊາຊົນສູງສຸດ ອາດຈະສ້າງຕັ້ງໜ່ວຍງານດຳເນີນຄະດີເດັກສະເພາະ.

**ມາດຕາ 67. ກຳນົດເວລາໃນການດຳເນີນຄະດີເດັກໃນຂັ້ນໄອຍະການປະຊາຊົນ**

ໄອຍະການປະຊາຊົນ ຕ້ອງຄົ້ນຄວ້າ ແລະພິຈາລະນາຄະດີ ທີ່ໄດ້ຮັບຈາກອົງການສືບສວນ-ສອບສວນ ພາຍໃນກຳນົດສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ ແລະຕົກລົງດັ່ງນີ້:

1. ສົ່ງສຳນວນຄະດີຄືນໃຫ້ອົງການສືບສວນ-ສອບສວນ ເພື່ອສືບສວນ-ສອບຖາມເພີ່ມເຕີມ;
2. ສັ່ງຟ້ອງຕໍ່ສານເດັກ.

ໃນກໍລະນີທີ່ໄອຍະການປະຊາຊົນ ຕົກລົງໄກ່ເກ່ຍຄະດີເດັກຢູ່ຂັ້ນຂອງຕົນ ຕ້ອງພິຈາລະນາ ໃຫ້ສຳເລັດພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ.

## ໝວດທີ 7
## ສານເດັກ

**ມາດຕາ 68. ການສ້າງຕັ້ງສານເດັກ**

ສານເດັກ ສ້າງຕັ້ງຂຶ້ນຢູ່ແຂວງ, ນະຄອນ ຕາມການອະນຸມັດຂອງຄະນະປະຈຳສະພາແຫ່ງຊາດ, ຂຶ້ນກັບສານປະຊາຊົນສູງສຸດໂດຍກົງ ແລະພິຈາລະນາເປັນຂັ້ນຕົ້ນ. ສຳລັບຂັ້ນອຸທອນ ແລະ ຂັ້ນລົບລ້າງ ແມ່ນຄະນະສານເດັກຂອງສານປະຊາຊົນຂັ້ນອຸທອນ ແລະ ສານປະຊາຊົນສູງສຸດເປັນຜູ້ພິຈາລະນາ.

ໃນກໍລະນີທີ່ບໍ່ທັນສາມາດສ້າງຕັ້ງໄດ້ນັ້ນ ແມ່ນມອບໃຫ້ຄະນະສານເດັກ ຂອງສານປະຊາຊົນ ເປັນຜູ້ພິຈາລະນາ.

**ມາດຕາ 69. ຄະດີທີ່ພິຈາລະນາຢູ່ສານເດັກ**

ສານເດັກ ມີສິດພິຈາລະນາຄະດີ ດັ່ງນີ້:

1. ຄະດີອາຍາທີ່ເດັກເປັນຜູ້ກະທຳຜິດ;
2. ຄະດີກ່ຽວກັບແຮງງານເດັກ;
3. ຄະດີແພ່ງທີ່ຮ້ອງຟ້ອງຕໍ່ສານກ່ຽວກັບເດັກ;
4. ຂໍ້ຂັດແຍ່ງອື່ນໆກ່ຽວກັບເດັກ.

**ມາດຕາ 70. ຫລັກການດຳເນີນຄະດີຂອງສານເດັກ**

ສານເດັກ ຕ້ອງດຳເນີນຄະດີຕາມຫລັກການຕົ້ນຕໍ ດັ່ງນີ້:

1. ການພິຈາລະນາຄະດີເດັກ ຕ້ອງໃຫ້ມີຫ້ອງປະຊຸມສານທີ່ເໝາະສົມ ຊຶ່ງແຕກຕ່າງຈາກຫ້ອງປະຊຸມສານທົ່ວໄປ ແລະດຳເນີນຢ່າງປິດລັບ;
2. ເດັກ ມີສິດເຂົ້າຮ່ວມໃນການພິຈາລະນາຄະດີ, ມີສິດສະເໜີຄຳເຫັນ ຊຶ່ງຕ້ອງໄດ້ຮັບການພິຈາລະນາ ບົນພື້ນຖານການຊັ່ງຊາຕາມອາຍຸ ແລະຄວາມສາມາດຂອງເດັກໃນການຈຳແນກຄວາມຖືກຜິດ;

3. ພາສາ ແລະຄຳສັບທີ່ໃຊ້ໃນສານເດັກ ຕ້ອງແມ່ນພາສາລາວ ແລະເປັນຄຳສັບທີ່ເດັກເຂົ້າໃຈງ່າຍ, ຖ້າເດັກບໍ່ຮູ້ພາສາລາວ ຕ້ອງໃຫ້ມີຜູ້ແປພາສາ;
4. ເດັກ ຕ້ອງໄດ້ຮັບການຊ່ວຍເຫລືອທາງດ້ານກົດໝາຍ ຈາກທະນາຍຄວາມ ຫລື ຜູ້ປົກປ້ອງອື່ນ ແລະມີພໍ່ແມ່ ຫລື ຜູ້ປົກຄອງເຂົ້າຮ່ວມນຳ;
5. ປະຕິບັດຕາມຫລັກການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 71. ກຳນົດເວລາໃນການດຳເນີນຄະດີຢູ່ສານເດັກ**

ສານເດັກ ຕ້ອງນຳເອົາຄະດີອອກມາພິຈາລະນາພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳສັ່ງຟ້ອງຂອງໄອຍະການປະຊາຊົນເປັນຕົ້ນໄປ.

**ມາດຕາ 72. ການວາງໂທດທາງອາຍາຕໍ່ເດັກ**

ນອກຈາກປະຕິບັດຕາມຫລັກການລວມຂອງການວາງໂທດ ທີ່ກຳນົດໄວ້ໃນກົດໝາຍອາຍາແລ້ວ ສານເດັກ ອາດຈະນຳໃຊ້ມາດຕະການ ຫລື ວາງໂທດ ທີ່ເໝາະສົມກັບອາຍຸ ແລະຄວາມສາມາດຂອງເດັກ ໃນການຈຳແນກຄວາມຖືກຜິດ ດັ່ງນີ້ :

1. ນຳໃຊ້ມາດຕະການຂອງສານຕໍ່ເດັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 53 (ໃໝ່) ຂອງກົດໝາຍອາຍາ;
2. ພາກໂທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍອາຍາ ແລ້ວສົ່ງໃຫ້ ພໍ່ແມ່ ຫລື ຜູ້ປົກຄອງ, ອົງການປົກຄອງບ້ານ ສຶກສາອົບຮົມ.

ການວາງໂທດຕັດອິດສະລະພາບໃສ່ເດັກກະທຳຜິດ ໃຫ້ເປັນມາດຕະການສຸດທ້າຍ ເວັ້ນເສຍແຕ່ການກະທຳຜິດໃນສະຖານຄະຣຸໂທດ.

ຫ້າມລົງໂທດປະຫານຊີວິດ ແລະໂທດຕັດອິດສະລະພາບຕະຫລອດຊີວິດ ໃສ່ເດັກກະທຳຜິດ. ໃນກໍລະນີທີ່ມີຄວາມຈຳເປັນຕ້ອງໄດ້ລົງໂທດຕັດອິດສະລະພາບໃສ່ເດັກນັ້ນ ສານເດັກ ອາດຈະວາງໂທດໃສ່ການກະທຳຜິດຂອງເດັກເຄິ່ງໜຶ່ງຂອງໂທດ ທີ່ກົດໝາຍອາຍາໄດ້ກຳນົດໄວ້ ຫລື ສານເດັກ ອາດຈະວາງໂທດຕ່ຳກວ່າໂທດທີ່ກົດໝາຍອາຍາໄດ້ກຳນົດໄວ້ ຕາມມາດຕາ 44 ຂອງກົດໝາຍອາຍາກໍໄດ້.

**ມາດຕາ 73. ການດຳເນີນຄະດີແພ່ງ ແລະ ຄະດີອື່ນໆຂອງສານເດັກ**

ສຳລັບການດຳເນີນຄະດີແພ່ງ ແລະຄະດີອື່ນໆ ຂອງສານເດັກ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 8
## ສູນຝຶກອົບຮົມສຳລັບເດັກກະທຳຜິດ

**ມາດຕາ 74. ສິດ ແລະ ໜ້າທີ່ ຂອງສູນຝຶກອົບຮົມສຳລັບເດັກກະທຳຜິດ**

ເດັກກະທຳຜິດ ແລະຖືກສານຕັດສິນລົງໂທດຕັດອິດສະລະພາບ ຈະຖືກສົ່ງເຂົ້າສູນຝຶກອົບຮົມສຳລັບເດັກ.

ສູນຝຶກອົບຮົມດັ່ງກ່າວ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ສຶກສາອົບຮົມແນວຄິດ, ຄຸນສົມບັດ, ການສຶກສາຮ່ຳຮຽນ, ຝຶກອົບຮົມວິຊາຊີບ ແລະໃຫ້ການບໍລິການອື່ນໆທີ່ຈຳເປັນ ໂດຍສະເພາະ ດ້ານສາທາລະນະສຸກ ເພື່ອຊ່ວຍໃຫ້ເດັກເປັນຄົນດີ ແລະສາມາດກັບຄືນເຂົ້າສູ່ສັງຄົມ;
2. ຈັດຕັ້ງການອອກແຮງງານ ຕາມຄວາມເໝາະສົມ ກັບອາຍຸຂອງເດັກ;
3. ພົວພັນ, ຮ່ວມມື ແລະປະສານສົມທົບກັບອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນຝຶກອົບຮົມສຳລັບເດັກກະທຳຜິດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 75. ສິດຂອງເດັກກະທຳຜິດໃນສູນຝຶກອົບຮົມ**

ເດັກກະທຳຜິດທີ່ຖືກສົ່ງເຂົ້າສູນຝຶກອົບຮົມ ມີສິດດັ່ງນີ້ :

1. ມີບ່ອນພັກເຊົາ ແລະ ໄດ້ຮັບອາຫານຢ່າງເໝາະສົມ;
2. ໄດ້ຮັບເຄື່ອງນຸ່ງຢ່າງເໝາະສົມ ແລະ ສອດຄ່ອງກັບສະພາບອາກາດ;
3. ໄດ້ຮັບການບໍລິການດ້ານສາທາລະນະສຸກ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ;
4. ໄດ້ຫລິ້ນກິລາ ແລະ ພັກຜ່ອນ;
5. ໄດ້ພົບພໍ່ແມ່ , ຜູ້ປົກຄອງ, ຜູ້ປົກປ້ອງ, ຍາດພີ່ນ້ອງ ແລະ ໝູ່ເພື່ອນ;
6. ໄດ້ຮັບຂໍ້ມູນຂ່າວສານທີ່ເປັນປະໂຫຍດສຳລັບເດັກ;
7. ໄດ້ຮັບການປົກປ້ອງຈາກທຸກຮູບແບບຂອງການທາລຸນ;
8. ໄດ້ຮັບສິດອື່ນໆທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 76. ຄວາມຮັບຜິດຊອບຂອງເດັກໃນສູນຝຶກອົບຮົມ**

ເດັກກະທຳຜິດທີ່ຖືກສົ່ງເຂົ້າສູນຝຶກອົບຮົມ ມີຄວາມຮັບຜິດຊອບຕົ້ນຕໍດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລະບຽບພາຍໃນຂອງສູນຢ່າງເຄັ່ງຄັດ;
2. ເອົາໃຈໃສ່ຝຶກຝົນຕົນເອງໃຫ້ກາຍເປັນເດັກທີ່ດີ;

3. ເອົາໃຈໃສ່ຕໍ່ການສຶກສາຮໍ່າຮຽນ, ອອກແຮງງານ ແລະຝຶກວິຊາຊີບ ;
4. ເຄົາລົບ ແລະ ນັບຖືສິດຂອງຄົນອື່ນທີ່ຢູ່ໃນສະຖານທີ່ດຽວກັນ.

**ມາດຕາ 77. ການຕິດຕາມ, ກວດກາສູນຝຶກອົບຮົມ**

ລັດ ເອົາໃຈໃສ່ຕິດຕາມ, ກວດກາຢ່າງເປັນປົກກະຕິ ກ່ຽວກັບການຝຶກອົບຮົມເດັກກະທໍາຜິດ ໂດຍມອບໃຫ້ອົງການໄອຍະການປະຊາຊົນສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຕິດຕາມ, ກວດກາການປະຕິບັດໜ້າທີ່ຂອງສູນຝຶກອົບຮົມດັ່ງກ່າວ ເພື່ອເຮັດໃຫ້ການຝຶກອົບຮົມນັ້ນ ໄດ້ດໍາເນີນໄປຢ່າງຖືກຕ້ອງ ຕາມລະບຽບກົດໝາຍ ແລະມີປະສິດທິຜົນ.

**ມາດຕາ 78. ການຊຸກຍູ້ ແລະ ຊ່ວຍເຫລືອເດັກທີ່ອອກຈາກສູນ**

ເດັກທີ່ອອກຈາກສູນຝຶກອົບຮົມເດັກກະທໍາຜິດ ແລະສູນບໍາບັດພື້ນຟູ ຕ້ອງໄດ້ຮັບການຊຸກຍູ້ ແລະຊ່ວຍເຫລືອ ຈາກຄະນະກໍາມະການປົກປ້ອງ ແລະຊ່ວຍເຫລືອເດັກ ດ້ວຍການຕິດຕາມ, ສຶກສາອົບຮົມ, ໃຫ້ຄໍາປຶກສາ ແລະໃຫ້ການຊ່ວຍເຫລືອແກ່ເດັກໃນການຊອກວຽກເຮັດງານທໍາ ເພື່ອໃຫ້ເດັກໄດ້ມີໂອກາດເຂົ້າສູ່ສັງຄົມໂດຍໄວ.

## ພາກທີ VI
## ການຄຸ້ມຄອງ ແລະ ກວດກາ ການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

**ມາດຕາ 79. ອົງການຄຸ້ມຄອງ ແລະ ກວດກາ**

ລັດຖະບານຄຸ້ມຄອງຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ກວດກາການຈັດຕັ້ງປະຕິບັດກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.

ລັດຖະບານມອບໃຫ້ຂະແໜງການທີ່ກ່ຽວຂ້ອງແຕ່ສູນກາງລົງຮອດທ້ອງຖິ່ນ ເປັນຕົ້ນ ກະຊວງຍຸຕິທໍາ, ຄະນະກໍາມາທິການເພື່ອແມ່ ແລະເດັກແຫ່ງຊາດ, ກະຊວງແຮງງານ ແລະສະຫວັດດີການສັງຄົມ, ສາທາລະນະສຸກ, ສຶກສາທິການ, ຖະແຫລງຂ່າວ ແລະວັດທະນະທໍາ, ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ ເປັນອົງການຄຸ້ມຄອງ ແລະ ກວດກາວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.

ໃນການຄຸ້ມຄອງ ແລະ ກວດກາການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແມ່ນກະຊວງຍຸຕິທໍາ ເປັນໃຈກາງໃນການປະສານງານລະຫວ່າງ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

**ມາດຕາ 80. ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດກາ**

ອົງການຄຸ້ມຄອງ ແລະ ກວດກາວຽກງານປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ ມີສິດ ແລະໜ້າທີ່ດັ່ງນີ້:

1. ວາງຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍກ່ຽວກັບການປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ;
2. ໂຄສະນາ, ເຜີຍແຜ່ ແນວທາງນະໂຍບາຍ, ລະບຽບກົດໝາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
3. ກໍ່ສ້າງ, ບຳລຸງພະນັກງານສະເພາະກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
4. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແນວທາງນະໂຍບາຍ, ລະບຽບກົດໝາຍກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
5. ເກັບກຳສະຖິຕິ ແລະຂໍ້ມູນກ່ຽວກັບເດັກ;
6. ປະສານສົມທົບກັບພາກສ່ວນຕ່າງໆກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
7. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
8. ສະຫລຸບ, ລາຍງານວຽກງານກ່ຽວກັບການປົກປ້ອງສິດ ແລະຜົນປະໂຫຍດຂອງເດັກ ໃຫ້ລັດຖະບານຊາບ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມລະບຽບກົດໝາຍ .

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 81. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ຫລື ໄດ້ຮັບນະໂຍບາຍອື່ນໆຕາມລະບຽບການ.

ເດັກຜູ້ໃດ ຫາກໄດ້ເປັນແບບຢ່າງທີ່ດີແກ່ໝູ່ເພື່ອນ ໃນການປະຕິບັດສິດ ແລະ ຄວາມຮັບຜິດຊອບຂອງຕົນ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ຫລື ໄດ້ຮັບນະໂຍບາຍອື່ນໆ ຕາມຄວາມເໝາະສົມ.

### ມາດຕາ 82. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການ ຕ່າງໆເຊັ່ນ: ມາດຕະການສຶກສາອົບຮົມ, ທາງບໍລິຫານ ຫລື ທາງອາຍາ ຕາມແຕ່ກໍລະນີເບົາ ຫລື ໜັກ ລວມທັງການໃຊ້ແທນຄ່າເສັຍຫາຍທາງແພ່ງ.

### ມາດຕາ 83. ມາດຕະການສຶກສາອົບຮົມ

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ ໃນກໍລະນີດັ່ງນີ້ :

- ການຂັດຂວາງບໍ່ໃຫ້ເດັກໄປປິ່ນປົວ, ສັກຢາກັນພະຍາດ, ສຶກສາຮໍ່າຮຽນ ແລະ ປະກອບສ່ວນ ເຂົ້າໃນກິດຈະກໍາຕ່າງໆ ທີ່ເປັນການພັດທະນາທາງຮ່າງກາຍ, ຈິດໃຈ, ມັນສະໝອງ, ຄວາມ ຮູ້ ແລະ ຄວາມສາມາດຂອງເດັກ;
- ການປະພຶດທີ່ເປັນແບບຢ່າງອັນບໍ່ດີແກ່ເດັກ;
- ການໃຊ້ເດັກໄປຊື້, ໂຄສະນາສິ່ງເສບຕິດ, ສິ່ງມຶນເມົາ;
- ການຕິດຕັ້ງປ້າຍໂຄສະນາເຫລົ້າ, ເບຍ, ຢາສູບ ຫລື ສິ່ງມຶນເມົາອື່ນໆ ຢູ່ໃກ້ໂຮງຮຽນ ຫລື ໃນ ເຂດຊຸມຊົນຂອງເດັກ;
- ການເມີນເສີຍບໍ່ປະຕິບັດໜ້າທີ່ຂອງພະນັກງານ ກ່ຽວກັບການປົກປ້ອງສິດ ແລະຜົນປະໂຫຍດ ຂອງເດັກ;
- ການຮັບເອົາເດັກທີ່ມີອາຍຸຕໍ່າກວ່າ ສິບສີ່ປີ ເຂົ້າເຮັດວຽກ;
- ການລະເມີດອື່ນໆທີ່ມີລັກສະນະເບົາບາງ ຊຶ່ງໄດ້ກໍານົດໄວ້ໃນກົດໝາຍສະບັບນີ້.

### ມາດຕາ 84. ມາດຕະການທາງບໍລິຫານ

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປັບໃໝ ຫລື ປະຕິບັດວິໄນ ໃນ ກໍລະນີດັ່ງນີ້ :

- ການລະເມີດມາດຕາ 83 ເທິງນີ້ ທີ່ໄດ້ຜ່ານການສຶກສາອົບຮົມມາແລ້ວ;
- ການອະນຸຍາດໃຫ້ເດັກເຂົ້າຮ້ານກິນດື່ມ ທີ່ບໍລິການປະເພດເຫລົ້າ, ເບຍ ຫລື ເຄື່ອງດື່ມ ທີ່ມີສິ່ງ ມຶນເມົາ ;
- ການອະນຸຍາດໃຫ້ເດັກເຂົ້າມົ້ວສຸມໃນສິ່ງລາມົກ ແລະ ອະນາຈານ;
- ການໃຫ້ເດັກເຮັດວຽກເກີນຊົ່ວໂມງ ຫລື ເຮັດວຽກໜັກ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍແຮງງານ;
- ການລະເມີດອື່ນໆ ຊຶ່ງໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ທີ່ມີໂທດທາງບໍລິຫານ.

ນອກຈາກມາດຕະການທີ່ກ່າວມາຂ້າງເທິງນີ້ແລ້ວ ຜູ້ລະເມີດອາດຈະຖືກໂຈະ ຫລື ຖອນໃບອະນຸ ຍາດດໍາເນີນກິດຈະການ.

ຄ່າປັບໃໝ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

### ມາດຕາ 85. ການເປີດເຜີຍປະຫວັດສ່ວນຕົວຂອງເດັກ

ບຸກຄົນຜູ້ໃດ ຫາກໄດ້ເປີດເຜີຍປະຫວັດສ່ວນຕົວ ຫລື ຂໍ້ມູນຂ່າວສານ ກ່ຽວກັບເດັກທີ່ເປັນຜູ້ຖືກເສັຍ ຫາຍ, ຜູ້ຖືກຫາ, ຈໍາເລີຍ ຫລື ເປັນຜູ້ກະທໍາຜິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະຈະຖືກປັບໃໝແຕ່ 500.000 ກີບ ຫາ 2.000 000 ກີບ.

**ມາດຕາ 86. ການເຜີຍແຜ່ສິ່ງລາມົກເດັກ**

ບຸກຄົນຜູ້ໃດ ຫາກໄດ້ ຜະລິດ,ຈຳໜ່າຍ, ເຜີຍແຜ່, ນຳເຂົ້າ, ສົ່ງອອກ, ສະແດງ ຫລື ຂາຍໜັງສື, ຮູບ, ຟິມວີດີໂອ, ວີຊີດີ, ດີວີດີ ແລະ ສິ່ງອື່ນໆທີ່ລາມົກເດັກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມ ປີ ແລະ ຈະຖືກປັບໃໝແຕ່ 2.000.000 ກີບ ຫາ 6.000.000 ກີບ.

**ມາດຕາ 87. ການໃຊ້ແຮງງານເດັກ**

ບຸກຄົນຜູ້ໃດ ຫາກໃຊ້ແຮງງານເດັກຢູ່ໃນຂົງເຂດທີ່ເປັນອັນຕະລາຍ ແລະຜ່ານການໃຊ້ມາດຕະການທາງບໍລິຫານມາແລ້ວ ຫາກບໍ່ເຂັດຫລາບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝແຕ່ 1.000.000 ກີບ ຫາ 2.000.000 ກີບ.

ໃນກໍລະນີທີ່ການໃຊ້ແຮງງານນັ້ນ ຫາກພາໃຫ້ເດັກເສຍອົງຄະ ຫລື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ເຈັດປີ ແລະຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 7.000.000 ກີບ.

**ມາດຕາ 88. ການປະຖິ້ມເດັກ**

ບຸກຄົນຜູ້ໃດ ຫາກໄດ້ປະຖິ້ມເດັກໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງ ປີ ແລະ ຈະຖືກປັບໃໝ ແຕ່ 600.000 ກີບ ຫາ 2.000.000 ກີບ.

ໃນກໍລະນີທີ່ການປະຖິ້ມ ຫາກເຮັດໃຫ້ເດັກເສຍອົງຄະ ຫລື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝແຕ່ 3.000.000 ກີບ ຫາ 7.000.000 ກີບ.

**ມາດຕາ 89. ການຮ່ວມເພດກັບເດັກ**

ບຸກຄົນຜູ້ໃດ ຫາກໄດ້ຮ່ວມເພດກັບເດັກຍິງ ຫລື ເດັກຊາຍ ທີ່ມີອາຍຸ ຕ່ຳກວ່າ ສິບແປດປີ ລົງມາຫາສິບຫ້າປີ ດ້ວຍການຈ່າຍຄ່າຕອບແທນ ຫລື ຕອບສະໜອງຜົນປະໂຫຍດດ້ວຍຮູບການໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມ ເດືອນ ຫາ ໜຶ່ງປີ ຫລື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະຈະຖືກປັບໃໝແຕ່ 1.000.000 ກີບ ຫາ 2.000.000 ກີບ.

ບຸກຄົນຜູ້ໃດ ຫາກໄດ້ຮ່ວມເພດກັບເດັກຍິງ ຫລື ເດັກຊາຍ ທີ່ມີອາຍຸຕ່ຳກວ່າ ສິບຫ້າປີ ລົງມາ ຫາ ສິບສອງປີ ດ້ວຍການຈ່າຍຄ່າຕອບແທນ ຫລື ຕອບສະໜອງຜົນປະໂຫຍດດ້ວຍຮູບການໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝແຕ່ 2.000.000 ກີບ ຫາ 5.000.000 ກີບ.

ບຸກຄົນຜູ້ໃດ ຫາກໄດ້ຮ່ວມເພດກັບເດັກຍິງ ຫລື ເດັກຊາຍ ທີ່ມີອາຍຸຕ່ຳກວ່າ ສິບສອງປີ ຈະດ້ວຍຮູບການໃດກໍຕາມ ຖືວ່າເປັນການຂົ່ມຂືນທຳຊຳເລົາເດັກ ແລະຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າ ປີ ແລະຈະຖືກປັບໃໝແຕ່ 7.000.000 ກີບ ຫາ 15.000.000 ກີບ.

ບຸກຄົນຜູ້ໃດ ທີ່ໄດ້ສະເໜີ, ຮັບເອົາ, ຈັດຫາ ຫລື ສະໜອງເດັກທີ່ມີອາຍຸຕ່ຳກວ່າ ສິບແປດປີ ລົງມາໃຫ້ເປັນໂສເພນີ ຖືວ່າເປັນການກະທຳຜິດ ແລະຈະຖືກລົງໂທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 134 (ໃໝ່) ຂອງກົດໝາຍອາຍາ.

**ມາດຕາ 90. ການຄ້າເດັກ**

ບຸກຄົນໃດຫາກໄດ້ກະທຳຜິດ ໃນສະຖານການຄ້າເດັກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບຫ້າປີ ແລະຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ ແລະຈະຖືກຣິບຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍອາຍາ.

**ມາດຕາ 91. ມາດຕະການທາງແພ່ງ**

ນອກຈາກໂທດທີ່ໄດ້ກຳນົດໄວ້ໃນມາດຕາ 85 ຫາ 90 ຂອງກົດໝາຍສະບັບນີ້ແລ້ວ ຜູ້ກະທຳຜິດຍັງຈະໄດ້ໃຊ້ແທນຄ່າເສຍຫາຍຕ່າງໆເຊັ່ນ: ຄ່າປິ່ນປົວ, ຄ່າປົວແປງຈິດໃຈ, ຄ່າປ່ອຍການ, ຄ່າເດີນທາງ, ຄ່າກິນຢູ່ພັກເຊົາ ແລະຄ່າເສຍຫາຍອື່ນໆ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 92. ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 93. ຜົນສັກສິດ**

ກົດໝາຍສະບັບນີ້ມີຜົນສັກສິດພາຍຫລັງ ເກົ້າສິບວັນ ນັບແຕ່ວັນປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ